*Journal of Science and Teacher Education (JLSTE) 1*(1), 94-106

# ປະສິດທິພາບ, ປະສິດທິຜົນ ແລະ ຄວາມເພິງພໍໃຈຂອງນັກຮຽນຊັ້ນມັດທະຍົມ ຕໍ່ການນໍາໃຊ້ວິທີສອນແບບ STAD ເຂົ້າໃນການຮຽນການສອນ ວິຊາ ພາສາລາວ ຊັ້ນມັດທະຍົມປີທີ 2 ທີ່ໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູຫຼວງນໍ້າທາ

*ຊອ.ປທ ນ ຫຼ້າແສງແກ້ວ ພົມລະພາ**

*ວິທະຍາໄລຄູຫຼວງນໍ້າທາ*

---

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງ: 1) ເພື່ອສຶກສາປະສິດທິພາບຂອງບົດສອນ ວິຊາ ພາສາລາວກ່ຽວກັບປະເພດ ແລະ ໜ້າທີ່ຂອງຄໍາເວົ້າ ໂດຍນໍາໃຊ້ວິທີສອນແບບ STAD ຕາມເກນ 80/80, 2) ເພື່ອສຶກສາປະສິດທິຜົນການຮຽນຮູ້ຂອງນັກຮຽນ ໃນວິຊາພາສາລາວ ກ່ຽວກັບປະເພດ ແລະ ໜ້າທີ່ຂອງຄໍາເວົ້າ ໂດຍໃຊ້ວິທີສອນແບບ STAD, 3) ເພື່ອສຶກສາຄວາມເພິງພໍໃຈຂອງນັກຮຽນຕໍ່ການຮຽນການສອນວິຊາພາສາລາວ ກ່ຽວກັບປະເພດ ແລະ ໜ້າທີ່ຂອງຄໍາເວົ້າ ໂດຍໃຊ້ວິທີສອນແບບ STAD ສໍາລັບນັກຮຽນຊັ້ນມັດທະຍົມປີທີ 2 ທີ່ໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູ ຫຼວງນໍ້າທາ ສົກຮຽນ 2021-2022. ກຸ່ມທົດລອງທີ່ໃຊ້ເຂົ້າໃນການວິໄຈໃນຄັ້ງນີ້ແມ່ນນັກຮຽນຊັ້ນມັດທະຍົມປີທີ 2, ຈໍານວນ 15 ຄົນ, ຍິງ 7 ຄົນ. ເຄື່ອງມືທີ່ໃຊ້ເຂົ້າໃນການວິໄຈໃນຄັ້ງນີ້ປະກອບມີ: ບົດສອນວິຊາພາສາລາວ ຈໍານວນ 7 ບົດ, ແບບທົດສອບວັດຜົນສໍາເລັດທາງການຮຽນຂອງນັກຮຽນຈໍານວນ 1 ສະບັບ, ແບບທົດສອບຍ່ອຍ 7 ສະບັບ ແລະ ແບບສອບຖາມຄວາມເພິງພໍໃຈຈໍານວນ 1 ສະບັບ. ຜົນຂອງການຄົ້ນຄວ້າພົບວ່າ: 1) ປະສິດທິພາບຂອງບົດສອນ ( $E_1/E_2$) ຂອງວິຊາ ພາສາລາວກ່ຽວກັບປະເພດຄໍາ ແລະ ໜ້າທີ່ຂອງຄໍາເວົ້າໃນພາສາລາວ ໂດຍໃຊ້ວິທີສອນແບບ STAD ມີປະສິດທິພາບເທົ່າກັບ 84.28 /90.83 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ 80/80. 2) ດັດສະນີປະສິດທິຜົນການຮຽນຮູ້ຂອງນັກຮຽນ (E.I) ໃນວິຊາພາສາລາວກ່ຽວກັບປະເພດ ແລະ ໜ້າທີ່ຂອງຄໍາເວົ້າ ໂດຍໃຊ້ວິທີສອນແບບ STAD ມີຄ່າເທົ່າກັບ 0.841 ຄິດເປັນເປີເຊັນເທົ່າກັບ 84.1%. 3) ຄວາມເພິງພໍໃຈຂອງນັກຮຽນຕໍ່ການນໍາໃຊ້ວິທີສອນແບບ STAD ເຂົ້າໃນການຮຽນການສອນ ວິຊາ ພາສາລາວກ່ຽວກັບປະເພດ ແລະ ໜ້າທີ່ຂອງຄໍາເວົ້າສໍາລັບນັກຮຽນຊັ້ນມັດທະຍົມປີທີ 2 ໂດຍລວມແມ່ນຢູ່ໃນລະດັບເພິງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ $\overline{X}$=3.94 ແລະ S.D=0.57.

***ຄໍາສັບສໍາຄັນ:*** *ວິທີສອນແບບ STAD, ການຮຽນການສອນ, ວິຊາພາສາລາວ, ປະເພດແລະ ໜ້າທີ່ຂອງຄໍາ*

---

** ຕິດຕໍ່ພົວພັນ: ຊອ. ປທ ນາງ ຫຼ້າແສງແກ້ວ ພົມລະພາ, ໂທ: 02056753617; ອີເມວ: lasengkeoplp@gmail.com*

# Effectiveness, Efficiency and Attitude of Secondary school Students to the Teacher's Teaching Technique of STAD Used in Teaching Lao Language Subject, 2nd Grade of Demonstrated Secondary school, Louangnamtha Teacher Training College

*Lasengkeo PHANLAPHA*
Louangnamtha Teacher Training College

**Abstract**

This research aims to 1) investigate the efficiency of a Lao language lesson plan on the types and functions of parts of speech using the STAD teaching technique based on the 80/80 criterion; 2) to examine the effectiveness of students' learning outcomes in the Lao language regarding the types and functions of parts of speech through the STAD teaching technique; and 3) to explore the attitudes of 2nd-grade students toward learning Lao language parts of speech through the STAD teaching technique at Demonstration Secondary School, Louangnamtha Teacher Training College, during the 2021–2022 academic year. The experimental target group for this research consisted of 15 2nd-grade students, including 7 females, from Demonstration Secondary School. The research instruments included seven Lao language lesson plans, one set of student achievement tests, and one set of questionnaires to assess students' attitudes. The research findings indicated that the efficiency of the Lao language lesson plan on parts of speech using the STAD teaching technique, measured as E1/E2, was 84.28/90.83, which exceeds the 80/80 criterion. The effectiveness index (EI) of students' cognitive achievement in Lao language parts of speech through the STAD teaching technique was 0.841, equivalent to 84.1%. The 2nd-grade students' attitudes toward learning Lao language parts of speech through the STAD teaching technique were at a very good level, with an average score of $\overline{X} = 3.94$ and a standard deviation (S.D.) of 0.57.

***Key words:*** *STAD Teaching Technique, Learning-Teaching, Lao Language, Parts of Speech's Type and Function*

** Correspondence: Lasengkeo PHANLAPHA, Tel: 02056753617; Email: lasengkeoplp@gmail.com*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ລັດຖະບານເຮົາໄດ້ຖືເອົາການພັດທະນາການສຶກສາ ແລະ ກິລາກໍຄື ການພັດທະນາຊັບພະຍາກອນມະນຸດເປັນຂໍກຸນແຈສຳຄັນໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດເພື່ອນຳເອົາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ແລະ ຄ່ອຍໆກ້າວໄປສູ່ປະເທດອຸດສາຫະກຳ ແລະ ທັນສະໄໝ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ກໍຄືມະຕິກອງປະຊຸມໃຫຍ່ສູນກາງພັກຄັ້ງທີ IX ໄດ້ເນັ້ນໃຫ້ເຫັນບົດບາດຄວາມສຳຄັນຂອງວຽກງານການສຶກສາ ແລະ ກິລາໂດຍໄດ້ຍົກໃຫ້ເຫັນເຖິງຄວາມຈຳເປັນໃນການຈັດຕັ້ງປະຕິບັດບາດກ້າວ 4 ບຸກທະລຸ ເພື່ອບັນລຸນະໂຍບາຍໃໝ່ ແລະ ການພັດທະນາປະເທດຊາດ ເຊິ່ງໃນນັ້ນກໍລວມມີ: ຄວາມກ້າວໜ້າທາງດ້ານການເມືອງແນວຄິດ, ການພັດທະນາຊັບພະຍາກອນມະນຸດ ແລະ ແກ້ໄຂບັນຫາສິ່ງທ້າທາຍຕ່າງໆທີ່ເປັນອຸປະສັກຕໍ່ການດຳເນີນທຸລະກິດ (ກະຊວງສຶກສາທິການ ແລະ ກິລາ, 2015, ໜ້າ. 18).

ກົດໝາຍວ່າດ້ວຍການສຶກສາ ມາດຕາ 5 ຫຼັກການກ່ຽວກັບວຽກງານການສຶກສາ ການເຄື່ອນໄຫວວຽກງານການສຶກສາໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້: 1) ສອດຄ່ອງກັບແຜນພັດທະນາເສດຖະກິດ - ສັງຄົມ ແລະແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ, 2) ຮັບປະກັນ 3 ລັກສະນະຄື: ລັກສະນະຊາດ, ລັກສະນະວິທະຍາສາດທັນສະໄໝ ແລະ ລັກສະນະມະຫາຊົນ, 3) ປະຕິບັດຕາມ 5 ຫຼັກມູນຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ແຮງງານສຶກສາ, ພະລະສຶກສາ ແລະ ສິລະປະສຶກສາຢ່າງເປັນເອກະພາບ, 4) ຮັບປະກັນໃຫ້ການຮຽນໄປຄຽງຄູ່ກັບການປະຕິບັດຕົວຈິງ ແລະ ໃຫ້ມີຄວາມສະເໝີພາບ, 5) ປະສານສົມທົບລະຫວ່າງໂຮງຮຽນ ແລະ ນອກໂຮງຮຽນກັບການສຶກສາອົບຮົມຢູ່ໃນຄອບຄົວ ແລະ ສັງຄົມ, 6) ຮັບປະກັນຄຸນນະພາບເຊື່ອມໂຍງເຂົ້າກັບການສຶກສາພາກພື້ນ ແລະ ສາກົນ (ກະຊວງສຶກສາທິການ ແລະ ກິລາ, 2015, ໜ້າ. 3).

ພາສາ ແມ່ນເຄື່ອງມືຕິດຕໍ່ສື່ສານລະຫວ່າງບຸກຄົນກັບບຸກຄົນຢູ່ໃນສັງຄົມ, ຊ່ວຍໃຫ້ຄົນເຮົາເກີດຄວາມເຂົ້າໃຈເຊິ່ງກັນ ແລະ ກັນໂດຍອາໄສຜ່ານພາສາ. ໃນນີ້, ພາສາລາວກໍເປັນພາສາປະຈຳຊາດ, ເປັນພາສາທາງການທີ່ມີຄວາມສຳຄັນ ເພາະເຮົານຳໃຊ້ພາສາລາວເປັນເຄື່ອງມືໃນການຕິດຕໍ່ສື່ສານໃນການພົວພັນສັງຄົມລະຫວ່າງປະຊາຊົນບັນດາເຜົ່າຕ່າງໆໃນທົ່ວປະເທດ. ນອກນັ້ນ ຍັງນຳໃຊ້ເຂົ້າໃນການຂຽນປຶ້ມຕຳລາວິຊາການ, ຖ່າຍທອດຄວາມຮູ້, ປະສົບການ, ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ

ມາສູ່ລູກຫຼານໃນປັດຈຸບັນ ແລະ ອະນາຄົດ. ການຮຽນພາສາລາວແມ່ນການຮຽນເອົາຄວາມຮູ້ດ້ານພາສາໂດຍຜ່ານການຟັງ, ການເວົ້າ, ການອ່ານ ແລະ ການຂຽນ ເພື່ອໃຫ້ເດັກທຸກຄົນອ່ານໄດ້ຂຽນເປັນ ແລະ ນຳໃຊ້ພາສາລາວໄດ້ຢ່າງຄ່ອງແຄ້ວຖືກຕ້ອງເພື່ອຄວາມກ້າວໜ້າທາງດ້ານການຮຽນ, ການເຮັດວຽກງານ ແລະ ການດຳລົງຊີວິດໃນອະນາຄົດ. ສະນັ້ນ, ວິຊາພາສາລາວຈຶ່ງມີບົດບາດຄວາມສຳຄັນຈັດເຂົ້າໃນຫຼັກສູດການຮຽນ - ການສອນບໍ່ວ່າຈະຢູ່ໃນຂັ້ນປະຖົມສຶກສາຈົນເຖິງຂັ້ນມະຫາວິທະຍາໄລ (ຄຳພັນ ຄຳອ່ອນ ພ້ອມຄະນະ, 2011, ໜ້າ. 1).

ຈາກການສຶກສາສະພາບການຮຽນ - ການສອນ ວິຊາ ພາສາລາວ ຊັ້ນ ມ.2 ທີ່ໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູ ຫຼວງນ້ຳທາ ເຫັນວ່າ: ການສອນຂອງຄູແມ່ນສອນຕາມຄວາມຮູ້ຄວາມເຂົ້າໃຈ, ສອນແບບເອົາຄູເປັນໃຈກາງ, ເນັ້ນການບັນຍາຍ, ຄູເປັນຜູ້ເວົ້າ, ເປັນຜູ້ສະຫຼຸບໃຈຄວາມສຳຄັນໃຫ້ນັກຮຽນເປັນສ່ວນຫຼາຍ, ນັກຮຽນມີສ່ວນຮ່ວມໃນກິດຈະກຳໜ້ອຍ, ສ່ວນຫຼາຍແມ່ນຮັບເອົາຄວາມຮູ້ຈາກຄູເປັນຕົ້ນຕໍ, ເຮັດໃຫ້ນັກຮຽນຂາດການຄົ້ນຄິດ, ຂາດການເຮັດວຽກເປັນກຸ່ມ, ຂາດການຊ່ວຍເຫຼືອເຊິ່ງກັນ ແລະ ກັນລະຫວ່າງຜູ້ເກັ່ງ ແລະ ຜູ້ອ່ອນ, ໃນເວລາດຳເນີນກິດຈະກຳຄູບໍ່ໄດ້ນຳພານັກຮຽນເຝິກປະຕິບັດຢ່າງພຽງພໍ, ການໃຊ້ພາສາລາວຂອງນັກຮຽນຈຳນວນຫຼາຍຍັງບໍ່ຖືກຕ້ອງ ເປັນຕົ້ນແມ່ນ ກ່ຽວກັບປະເພດຄຳເວົ້າ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ເຊິ່ງນັກຮຽນບໍ່ສາມາດຈຳແນກປະເພດຄຳເວົ້າ ແລະ ການເຮັດໜ້າທີ່ຂອງຄຳເວົ້າທັງ 7 ປະເພດໄດ້ຢ່າງຖືກຕ້ອງ, ນັກຮຽນຂາດຄວາມຮັບຜິດຊອບຕໍ່ການຮຽນຮູ້ດ້ວຍຕົນເອງ ເຊິ່ງສິ່ງຜົນຕໍ່ການຮຽນຂອງນັກຮຽນບໍ່ມີປະສິດທິພາບ. ຈາກບັນຫາດັ່ງກ່າວນີ້ເຫັນວ່າ: ມີຄວາມຈຳເປັນຕ້ອງມີການພັດທະນາການຮຽນຮູ້ກ່ຽວກັບການຈຳແນກປະເພດຄຳ ແລະ ໜ້າທີ່ຂອງຄຳເວົ້າຂອງນັກຮຽນໃຫ້ມີປະສິດທິພາບດີຂຶ້ນ. ສະນັ້ນ, ຜູ້ຄົ້ນຄວ້າ ຈຶ່ງໄດ້ສຶກສາວິທີສອນແບບຕ່າງໆເພື່ອມາແກ້ໄຂບັນຫາການຮຽນກ່ຽວກັບປະເພດຄຳ ແລະ ໜ້າທີ່ຂອງຄຳ ໃຫ້ກັບນັກຮຽນ ແລະ ໃນນັ້ນກໍໄດ້ພົບວ່າ: ວິທີສອນແບບ STAD ເປັນວິທີສອນໜຶ່ງທີ່ຊ່ວຍໃຫ້ຜູ້ຮຽນມີການຮຽນຮູ້ແບບຮ່ວມມືກັນ ໂດຍໃຊ້ເກມການແຂ່ງຂັນເຂົ້າຊ່ວຍ ເພື່ອເຮັດໃຫ້ມີບັນຍາກາດໃນຫ້ອງຮຽນດີ, ສົ່ງເສີມໃຫ້ຜູ້ຮຽນສະແດງຄວາມຄິດເຫັນກັບໝູ່ເພື່ອນ, ຮູ້ເຮັດວຽກກັບໝູ່ເພື່ອນ, ໃຫ້ຜູ້ຮຽນໄດ້ປະຕິສຳພັນຕໍ່ກັນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນພາຍໃນກຸ່ມ, ເປັນການຮຽນຮູ້ທີ່ຄຳນຶງເຖິງຜູ້ຮຽນເປັນສຳຄັນ, ຜູ້ສອນໄດ້ເປີດໂອກາດໃຫ້ຜູ້ຮຽນໄດ້ຮຽນເປັນກຸ່ມ ແລະ ເປັນຄູ່ ໂດຍກຳນົດໃຫ້ຜູ້ຮຽນເກັ່ງຊ່ວຍເຫຼືອຜູ້ອ່ອນໃນກຸ່ມ ແຕ່ສະມາຊິກໃນກຸ່ມປະກອບດ້ວຍຜູ້ທີ່ມີຄວາມສາມາດໃນການຮຽນແຕກຕ່າງກັນໂດຍສະມາຊິກຈະຄ່ອຍກະຕຸ້ນເຊິ່ງກັນ ແລະ ກັນເພື່ອພາກຸ່ມໄປສູ່ຄວາມສຳເລັດເປົ້າໝາຍທີ່ຕ້ອງການ, ສະມາຊິກໃນກຸ່ມຈະໄດ້ຮັບການຮຽນຮູ້ ແລະ ມີຄວາມສາມາດເພີ່ມຂຶ້ນ.

ສະນັ້ນ, ຜູ້ວິໄຈຈຶ່ງມີຄວາມສົນໃຈຢາກທົດລອງໃຊ້ວິທີສອນແບບ STAD ເຂົ້າໃນການຮຽນການສອນ ວິຊາພາສາລາວ ກ່ຽວກັບ ປະເພດຄຳ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ຂອງນັກຮຽນຊັ້ນມັດທະຍົມ ປີທີ 2 ທີ່ມັດທະຍົມສາທິດ ເພື່ອພັດທະນາພັດທະນາການຮຽນຮູ້ຂອງນັກຮຽນໃຫ້ມີປະສິດທິພາບສູງຂຶ້ນ.

### *1.2. ຄຳຖາມຂອງການຄົ້ນຄ້ວາ*

1) ການສອນ ວິຊາ ພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ໂດຍໃຊ້ວິທີສອນ ແບບ STAD ຈະມີປະສິດທິພາບແນວໃດ?.

2) ຜົນການຮຽນຂອງນັກຮຽນ ວິຊາ ພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ໂດຍໃຊ້ວິທີສອນແບບ STAD ຈະມີປະສິດທິຜົນແນວໃດ?.

3) ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການຮຽນ - ການສອນ ວິຊາ ພາສາລາວກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ໂດຍໃຊ້ວິທີ ສອນແບບ STAD ເປັນແນວໃດ?

### *1.3. ຈຸດປະສົງຂອງການຄົ້ນຄ້ວາ*

1) ເພື່ອສຶກສາປະສິດທິພາບຂອງບົດສອນ ວິຊາ ພາສາລາວ ກ່ຽວກັບ ປະເພດຄຳ ແລະ ໜ້າທີ່ຂອງຄຳເວົ້າ ໂດຍນຳໃຊ້ວິທີສອນແບບ STAD ຕາມເກນ 80/80.

2) ເພື່ອສຶກສາປະສິດທິຜົນການຮຽນຮູ້ຂອງນັກຮຽນໃນວິຊາພາສາລາວ ກ່ຽວກັບ ປະເພດຄຳ ແລະ ໜ້າທີ່ຂອງຄຳເວົ້າໂດຍໃຊ້ວິທີສອນແບບ STAD.

3) ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການຮຽນການສອນ ວິຊາ ພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າ ໂດຍໃຊ້ວິທີສອນແບບ STAD ສຳລັບນັກຮຽນຊັ້ນມັດທະຍົມປີທີ 2 ທີ່ໂຮງຮຽນມັດທະຍົມສາທິດ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ໃນການຄົ້ນຄວ້າວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ສຶກສາຄົ້ນຄວ້າ, ທົບທວນທິດສະດີ, ເອກະສານ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ເພື່ອນຳມາສັງເຄາະເປັນຂອບເຂດແນວຄິດຂອງການວິໄຈ ແລະ ໜຶ່ງໃນທິດສະດີທີ່ສຳຄັນທີ່ຜູ້ວິໄຈໄດ້ສຶກສາຄົ້ນຄວ້າໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງເພື່ອນຳມາເປັນກອບໃນການອອກແບບການສອນໃນຄັ້ງນີ້ກໍແມ່ນ: ແນວຄິດທິດສະດີກ່ຽວກັບການຈັດການຮຽນຮູ້ໂດຍໃຊ້ວິທີສອນແບບ STAD.

*2.1 ແນວຄິດທິດສະດີກ່ຽວກັບການຈັດການຮຽນຮູ້ໂດຍໃຊ້ວິທີສອນແບບ STAD*

ການຮຽນແບບຮ່ວມມືດ້ວຍເທັກນິກ STAD ເປັນເທັກນິກໜຶ່ງຂອງການຮຽນແບບຮ່ວມມື(Cooperative learning) ພັດທະນາຂຶ້ນໂດຍ Robert E. Slavin ຜູ້ອຳນວຍການໂຄງການສຶກສາລະດັບປະຖົມສຶກສາ ສູນວິໄຈປະສິດທິພາບການຮຽນຂອງຜູ້ຮຽນ ທີ່ມີບັນຫາທາງດ້ານວິຊາການແຫ່ງມະຫາວິທະຍາໄລ ຈໍຮອບສະກິນ ສະຫະລັດອາເມລິກາ ແລະ ເປັນຜູ້ຊ່ຽວຊານການສອນຄະນິດສາດ, ເຊິ່ງ Slavin ໄດ້ພັດທະນາເທັກນິກນີ້ຂຶ້ນ ເພື່ອກຳຈັດບັນຫາທາງການສຶກສາ ໂດຍມຸ່ງເນັ້ນທັກສະການຄິດ ການຮຽນທີ່ເປັນລະບົບ, ເປັນທາງເລືອກໜຶ່ງສຳລັບ ການຮຽນເປັນກຸ່ມ ແລະ ເປັນວິທີການສ້າງສຳພັນທະພາບລະຫວ່າງຜູ້ຮຽນເຊິ່ງເປັນການຮຽນທີ່ເປີດໂອກາດໃຫ້ຜູ້ຮຽນ ໄດ້ໃຊ້ຄວາມຄິດຮ່ວມກັນແລກປ່ຽນປະສົບການຄວາມຄິດ, ເຫດຜົນເຊິ່ງກັນ ແລະ ກັນ, ໄດ້ຮຽນຮູ້ສະພາບອາລົມ, ຄວາມຮູ້ສຶກນຶກຄິດຂອງຄົນໃນກຸ່ມ ເພື່ອເປັນແນວຄິດໄປໃຊ້ໃຫ້ເປັນປະໂຫຍດໃນຊີວິດປະຈຳວັນ ຕາມຄວາມເໝາະສົມຂອງແຕ່ລະບຸກຄົນ ຕະຫຼອດຮອດເພື່ອຈະຮຽນຮູ້ ແລະ ຮັບຜິດຊອບວຽກຂອງຜູ້ອື່ນຄືກັບວຽກຂອງຕົນ ໂດຍມຸ່ງເນັ້ນຜົນປະໂຫຍດ ແລະ ຄວາມສຳເລັດຂອງກຸ່ມ.

*2.2 ຂັ້ນຕອນການຈັດການຮຽນ - ການສອນແບບ STAD*

ຜ່ານການສຶກສາຄົ້ນຄວ້າແນວຄິດທິດສະດີວິທີສອນເຫັນວ່າ ວິທີສອນແບບ STAD ປະກອບດ້ວຍ 5 ຂັ້ນຕອນຫຼັກດັ່ງນີ້: (ສຸວິດ ມູນຄຳ, ອໍລະໄທ ມູນຄຳ, 2551, ໜ້າ. 172-174)

1) ຂັ້ນກະກຽມເນື້ອໃນ

ຂັ້ນກະກຽມເນື້ອໃນ ແມ່ນປະກອບດ້ວຍ ການຈັດກຽມເນື້ອໃນບົດຮຽນ ຄື ຜູ້ສອນຈັດກຽມເນື້ອໃນບົດຮຽນ ຫຼື ເລື່ອງທີ່ຈະໃຫ້ຜູ້ຮຽນໄດ້ຮຽນຮູ້ເປັນເນື້ອໃນໃໝ່ ໂດຍກິດຈະກຳໃຫ້ຜູ້ຮຽນສຶກສາຮຽນຮູ້ດ້ວຍຕົນເອງລວມທັງສື່, ວັດສະດຸອຸປະກອນ ຫຼື ແຫຼ່ງຮຽນຮູ້, ໃບຄວາມຮູ້, ໃບງານກິດຈະກຳ ແລະ ການກຽມແບບທົດສອບຍ່ອຍ ເຊັ່ນ: ຂໍ້ທົດສອບ, ຂະໜານຕອບ, ເກນການໃຫ້ຄະແນນ ເປັນຕົ້ນ.

2) ຂັ້ນຈັດກຸ່ມ ຫຼື ທີມ

ຜູ້ສອນຈັດກຸ່ມຜູ້ຮຽນໂດຍໃຫ້ເທົ່າທຽມກັນທັງເພດ ແລະ ຄວາມສາມາດ ກຸ່ມລະປະມານ 4-5 ຄົນເຊັ່ນ: ກຸ່ມທີ່ມີສະມາຊິກ 4 ຄົນ ອາດຈະປະກອບດ້ວຍຊາຍ 2 ຄົນ, ຍິງ 2 ຄົນ, ເປັນຄົນເກັ່ງ 1 ຄົນ, ປານກາງ 2 ຄົນ ແລະ ອ່ອນ 1 ຄົນ.

3) ຂັ້ນຕອນການຈັດກິດຈະກຳການຮຽນ - ການສອນປະກອບດ້ວຍ:

- ຜູ້ສອນແນະນຳການຮຽນຮູ້.
- ກຸ່ມວາງແຜນການຮຽນຮູ້ ໂດຍແບ່ງພາລະໜ້າທີ່ກັນເຊັ່ນ: ຜູ້ອ່ານ, ຜູ້ຫາຄຳຕອບ, ຜູ້ສະໜັບສະໜູນ, ຜູ້ຈົດບັນທຶກ ແລະ ຜູ້ປະເມີນ ເປັນຕົ້ນ.
- ສະມາຊິກໃນແຕ່ລະກຸ່ມສຶກສາເນື້ອໃນບົດຮຽນ ແລະ ປັດກິດຈະກຳຕາມທີ່ຜູ້ສອນກຳນົດໃຫ້.
- ຜູ້ຮຽນ ຫຼື ສະມາຊິກແຕ່ລະກຸ່ມ ທົບທວນຄວາມຮູ້ ແລະ ຄວາມເຂົ້າໃຈໃນເນື້ອໃນບົດຮຽນ.

4) ຂັ້ນທົດສອບ

ໃນຂັ້ນທົດສອບນີ້ ຜູ້ສອນແມ່ນໄດ້ດຳເນີນຕາມຂັ້ນຕອນດັ່ງນີ້:

- ຜູ້ຮຽນແຕ່ລະຄົນເຮັດການທົດສອບຍ່ອຍ ເພື່ອວັດຄວາມຮູ້, ຄວາມເຂົ້າໃຈໃນເນື້ອໃນບົດຮຽນທີ່ໄດ້ຮຽນຮູ້ຈາກຂໍ້ທົດສອບຂອງຜູ້ຮຽນ.
- ຜູ້ສອນ ແລະ ຜູ້ຮຽນອາດຮ່ວມກັນກວດສອບຜົນການທົດສອບຂອງສະມາຊິກແຕ່ລະຄົນ.
- ກຸ່ມຈັດຄະແນນພັດທະນາຂອງສະມາຊິກແຕ່ລະຄົນ ແລະ ຄະແນນພັດທະນາຂອງກຸ່ມ
- ໃຫ້ແຕ່ລະກຸ່ມນຳຄະແນນການພັດທະນາຂອງກຸ່ມໄປທຽບກັບເກນ ເພື່ອຫາລະດັບຄຸນນະພາບ

5) ຂັ້ນການຮັບຮອງຜົນງານ ແລະ ເຜີຍແຜ່ຊື່ສຽງຂອງກຸ່ມເປັນການປະກາດຜົນງານຂອງແຕ່ລະກຸ່ມ ວ່າຢູ່ໃນລະດັບຄຸນນະພາບໃດ, ຮັບຮອງຍົກຍ້ອງ, ຊົມເຊີຍກຸ່ມທີ່ມີຄະແນນພັດທະນາການສູງໃນຮູບແບບຕ່າງໆ ເຊັ່ນ: ຕິດປະກາດ, ໃຫ້ລາງວັນ, ລົງຈົດໝາຍຂ່າວ, ປະກາດຊື່ສຽງຕາມສາຍເປັນຕົ້ນ.

*2.3 ບົດຄົ້ນຄວ້າທີ່ກ່ຽວຂ້ອງ*

ເມື່ອສຶກສາຄົ້ນຄວ້າແນວຄິດທິດສະດີ ແລະ ຂັ້ນຕອນຂອງວິທີສອນແບບ STAD ເຂົ້າໃຈຢ່າງລະອຽດແລ້ວ ຜູ້ວິໄຈກໍໄດ້ສຶກສາຄົ້ນຄົ້ນບົດຄົ້ນຄວ້າທີ່ກ່ຽວຂ້ອງກັບວິທີສອນແບບ STAD ເພື່ອໃຫ້ເປັນບ່ອນຢັ້ງຢືນຕໍ່ກັບຜົນຂອງການວິໄຈທີ່ຈະໄດ້ຮັບ.

ບຸນຍົນ ວົງໄພໂລດ (2015) ໄດ້ສຶກສາການຈັດການຮຽນການສອນເລື່ອງຄຳ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວໂດຍໃຊ້ວິທີສອນແບບ STAD ສຳລັບນັກສຶກສາ ປີທີ 1 ລະບົບ 12+4 ສາຍຄູພາສາລາວ-ວັນນະຄະດີ ທີ່ວິທະຍາໄລຄູຫຼວງພະບາງ ຜົນການຄົ້ນຄວ້າພົບວ່າ: 1) ປະສິດທິພາບຂອງບົດສອນ ເລື່ອງຄຳ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ໂດຍໃຊ້ວິທີສອນແບບ STAD ມີປະສິດທິພາບເທົ່າ 84.21/91.5 ສູງກວ່າເກນທີ່ຕັ້ງໄວ້ 80/80. 2) ດັດສະນີປະສິດທິຜົນການຮຽນຮູ້ຂອງນັກນຶກສາ ເລື່ອງຄຳ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວໂດຍນຳໃຊ້ວິທີ

ສອນແບບ STAD ມີຄ່າເທົ່າກັບ 0.88. 3) ນັກສຶກສາມີຄວາມເພິ່ງພໍໃຈຕໍ່ການຮຽນການສອນ ໂດຍນຳໃຊ້ວິທີສອນແບບ STAD ໂດຍລວມຢູ່ໃນລະດັບເພິ່ງພໍໃຈຫຼາຍ.

ສິດທິສອນ ສຸກໄຊສະຫວັດ (2018) ໄດ້ສຶກສາເລື່ອງ ການນຳໃຊ້ວິທີສອນແບບ STAD ເຂົ້າໃນການຈັດການຮຽນ - ການສອນ ວິຊາ ພາສາລາວ ເລື່ອງການຂຽນຂອງນັກຮຽນຊັ້ນ ມ.5 ໂຮງຮຽນມັດທະຍົມສຶກສາສົມບູນຍົມມະລາດ ແຂວງຄຳມ່ວນ. ຜົນການຄົ້ນຄວ້າພົບວ່າ: 1) ປະສິດທິພາບຂອງບົດສອນ (E1/E2) ໂດຍການນຳໃຊ້ວິທີສອນແບບ STAD ເຂົ້າໃນການຈັດກິດຈະກຳ ການຮຽນ - ການສອນ ວິຊາ ພາສາລາວ ເລື່ອງການອ່ານ ແລະ ການຂຽນ ສຳລັບນັກຮຽນຊັ້ນ ມ.5 ມີຄ່າປະສິດທິພາບເທົ່າກັບ 83.39/83.98 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ 80/80. 2) ປະສິດທິຜົນການຮຽນຮູ້ຂອງນັກຮຽນມີຄ່າເທົ່າ 0.6861 ຄິດເປັນເປີເຊັນເທົ່າ 68.61%. 3) ນັກຮຽນມີຄວາມເພິ່ງພໍໃຈຕໍ່ກັບການນຳໃຊ້ວິທີສອນແບບ STAD ເຂົ້າໃນການຈັດກິດຈະກຳການຮຽນ ການສອນ ວິຊາພາສາລາວ ເລື່ອງການອ່ານ ແລະ ການຂຽນ ສຳລັບນັກຮຽນ ຊັ້ນ ມ.5 ໂດຍລວມແມ່ນຢູ່ໃນລະດັບເພິ່ງພໍໃຈຫຼາຍ.

ຈິລະນັນ ໄຕແສງ (2551) ຄົ້ນຄວ້າຫົວຂໍ້ ຜົນການຈັດການຮຽນການສອນພາສາໄທດ້ານການອ່ານເຊີງວິເຄາະ ນັກຮຽນຊັ້ນມ.2 ດ້ວຍກຸ່ມຮ່ວມມື STAD ຜົນການຄົ້ນຄວ້າພົບວ່າ:1) ການຈັດການຮຽນການສອນມີປະສິດທິພາບເທົ່າ 88.81/85.75. 2) ຄ່າດັດສະນີປະສິດທິຜົນຂອງແຜນການຈັດກິດຈະກຳການຮຽນການສອນ ເທົ່າກັບ 0.585. 3) ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ກັບການຈັດກິດຈະກຳການຮຽນການສອນແມ່ນຢູ່ໃນລະດັບສູງຫຼາຍ

## 3. ວິທີດຳເນີນການຄົ້ນຄວ້າ

ໃນເບື້ອງຕົ້ນຜູ້ຄົ້ນຄວ້າໄດ້ສຶກສາສະພາບບັນຫາຂອງການຈັດການຮຽນການສອນ ພາຍໃນໂຮງຮຽນມັດທະຍົມສາທິດວິທະຍາໄລຄູຫຼວງນ້ຳທາ ເພື່ອຊອກຫາສະພາບບັນຫາ ແລະ ຂໍ້ຄົງຄ້າງໃນການຈັດການຮຽນການສອນ ວິຊາພາສາລາວ ເພື່ອເປັນເຫດຜົນໃນການສຶກສາຄົ້ນຄວ້າ ພ້ອມທັງໄດ້ສຶກສາທິດສະດີພື້ນຖານ ແລະ ຜົນການຄົ້ນຄວ້າທີ່ກ່ຽວຂ້ອງ, ຈາກນັ້ນຜູ້ຄົ້ນຄວ້າກໍໄດ້ກຳນົດຮູບແບບຂອງການຄົ້ນຄວ້າໂດຍນຳໃຊ້ຮູບແບບການທົດລອງແບບ (One Group Pretest-Posttest Design) ເຊິ່ງດຳເນີນການທົດລອງໂດຍໃຊ້ກຸ່ມເປົ້າໝາຍດຽວ ມີການທົດສອບກ່ອນ ແລະ ຫຼັງການວິໄຈ ດັ່ງຕາຕະລາງລຸ່ມນີ້:

ຕາຕະລາງທີ 1: ຮູບແບບການທົດລອງ (One Group Pretest-Posttest Design)

| ກຸ່ມ | ທົດສອບກ່ອນການຮຽນ | ທົດລອງ | ທົດສອບຫຼັງການຮຽນ |
|---|---|---|---|
| ກຸ່ມທົດລອງ | $O_1$ | $X$ | $O_2$ |

ສຳລັບວິທີການຄົ້ນຄວ້າວິໄຈແບບທົດລອງໃນຄັ້ງນີ້ແມ່ນໄດ້ປະຕິບັດໄປຕາມຂັ້ນຕອນຄື:

1) ກ່ອນຈະດຳເນີນການສິດສອນຄັ້ງທຳອິດແມ່ນຈະເຮັດການທົບສອບລວມກ່ອນແລ້ວຈຶ່ງດຳເນີນການສິດສອນໄປຕາມແຕ່ລະແຜນການສອນ.

2) ຫຼັງຈາກການສິດສອນສຳເລັດໃນແຕ່ລະຄັ້ງທີ່ຂຶ້ນສອນແລ້ວແມ່ນຈະໄດ້ເຮັດການທົດສອບຍ່ອຍແຕ່ລະບົດໃຫ້ຄົບ 7 ຄັ້ງທີ່ຂຶ້ນສອນ ຫຼື ເປັນການທົດສອບປະຈຳບົດທີ່ຂຶ້ນສອນ.

3) ຫຼັງຈາກສິດສອນສຳເລັດທັງ 7 ຄັ້ງ ແມ່ນຈະໄດ້ເຮັດການທົດສອບລວມຫຼັງການສອນທັງໝົດຫຼັງຕາມທີ່ໄດ້ກຳນົດໄວ້.

4) ຈາກນັ້ນນຳເອົາຜົນການທົດສອບໄປວິເຄາະກັບສູດຄິດໄລ່ຕ່າງໆເພື່ອສະຫຼຸບເປັນຂໍ້ມູນຂອງການທົດລອງ.

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ເນື່ອງຈາກວ່າ ການຄົ້ນຄວ້າໃນຄັ້ງນີ້ເປັນການຄົ້ນຄວ້າແບບທົດລອງ ໂດຍເນັ້ນໃສ່ກຸ່ມເປົ້າໝາຍທີ່ຈະເຮັດການຄົ້ນຄວ້າ. ສະນັ້ນ, ຈຶ່ງໄດ້ ຄັດເລືອກເອົານັກຮຽນຊັ້ນມັດທະຍົມປີທີ 2 ຈຳນວນ 15 ຄົນ, ຍິງ 7 ຄົນ ທີ່ໂຮງຮຽນມັດທະຍົມສາທິດວິທະຍາໄລຄູຫຼວງນ້ຳທາ ເຊິ່ງໄດ້ມາໂດຍການຄັດເລືອກແບບເຈາະຈົງ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ນຳໃຊ້ເຂົ້າໃນການເກັບກຳຂໍ້ມູນຄັ້ງນີ້ປະກອບມີ:

1) ບົດສອນ ວິຊາພາສາລາວ ຈຳນວນ 7 ບົດ.

2) ແບບທົດສອບວັດຜົນທາງການຮຽນຂອງນັກຮຽນຈຳນວນ 1 ສະບັບ.

3) ແບບທົດສອບຍ່ອຍ (ແບບທົດສອບປະຈຳບົດ) ຈຳນວນ 7 ສະບັບ.

4) ແບບສອບຖາມຄວາມເພິ່ງພໍໃຈຂອງນັກຮຽນຕໍ່ກັບການຮຽນ - ການສອນ ໂດຍໃຊ້ວິທີສອນແບບ STAD ຈຳນວນ 1 ສະບັບ.

ຂັ້ນຕອນໃນການສ້າງເຄື່ອງມືແຕ່ລະແບບແມ່ນໄດ້ປະຕິບັດດັ່ງນີ້:

*3.2.1. ການສ້າງບົດສອນ*

1) ສຶກສາແນວຄິດທິດສະດີ ແລະ ເທັກນິກການສອນແບບ STAD ຈາກເອກະສານໃຫ້ເຂົ້າໃຈເພື່ອນຳມາເປັນແນວທາງໃນການສ້າງບົດສອນ.

2) ສຶກສາຫຼັກສູດລາຍ ວິຊາ ພາສາລາວ ຊັ້ນ ມ.2 ຈາກນັ້ນກໍກໍານົດຈຸດປະສົງ, ກິດຈະກໍາ ແລະ ເນື້ອໃນທີ່ຈະນໍາມາແຕ່ງບົດສອນ.

3) ກໍານົດອົງປະກອບສໍາຄັນຂອງແຕ່ລະບົດສອນໃຫ້ສອດຄ່ອງກັບເນື້ອໃນການຮຽນຮູ້ ແລະ ຜົນການຮຽນຮູ້ທີ່ຄາດຫວັງ ທັງໝົດ 7 ບົດສອນ, ໂດຍແຕ່ລະບົດໃຊ້ເວລາໃນການສອນ 2 ຊົ່ວໂມງລວມເປັນ 14 ຊົ່ວໂມງ.

4) ດໍາເນີນການແຕ່ງບົດສອນແຕ່ລະບົດໄປຕາມຂັ້ນຕອນຂອງວິທີສອນແບບ STAD.

5) ນໍາເອົາບົດສອນທີ່ສ້າງຂຶ້ນ ສະເໜີຕໍ່ອາຈານທີ່ປຶກສາ ເພື່ອກວດສອບຄວາມຖືກຕ້ອງ, ຄວາມເໝາະສົມ.

6) ນໍາເອົາບົດສອນທີ່ປັບປຸງແກ້ໄຂແລ້ວໄປຜ່ານຜູ້ຊ່ຽວຊານຈໍານວນ 3 ທ່ານ ເຊິ່ງໃຫ້ຜູ້ຊ່ຽວຊານປະເມີນຄ່າດັດຊະນີຄວາມສອດຄ່ອງຂອງບົດສອນໂດຍໃຊ້ຄ່າ (Index of Objective Congruence: IOC).

7) ນໍາເອົາບົດສອນມາປັບປຸງ ແລະ ແກ້ໄຂຕາມການແນະນໍາຂອງຜູ້ຊ່ຽວຊານ ມາຈັດພິມເປັນສະບັບສົມບູນ ແລະ ນໍາໄປໃຊ້ກັບນັກຮຽນ.

*3.2.2. ການສ້າງແບບທົດສອບ*

1) ສຶກສາວິທີສ້າງແບບທົດສອບວັດຜົນສໍາເລັດທາງການຮຽນຈາກປຶ້ມການວິໄຈເບື້ອງຕົ້ນ (ບຸນຊົມ ສີສະອາດ, 2554, ໜ້າ. 65-69)

2) ວິເຄາະຫຼັກສູດໂດຍອີງໃສ່ 6 ລະດັບດ້ານສະຕິປັນຍາຂອງ Bloom ດ້ວຍການສຶກສາເນື້ອໃນ ແລະ ຈຸດປະສົງຂອງການຮຽນ - ການສອນ ວິຊາ ພາສາລາວ ເພື່ອກໍານົດລະດັບຄວາມສໍາຄັນ ແລ້ວສ້າງບົດທົດສອບ ໃຫ້ສອດຄ່ອງກັບຈຸດປະສົງ ແລະ ເນື້ອໃນການຮຽນຮູ້.

3) ສຶກສາວິທີສ້າງແບບທົດສອບ ແບບປາລະໄນຊະນິດເລືອກຕອບ 4 ຕົວເລືອກເພື່ອນໍາມາສ້າງຂໍ້ສອບໃຫ້ຄອບຄຸມເນື້ອໃນ, ຈຸດປະສົງຂອງຫຼັກສູດ ແລະ ສິ່ງທີ່ຕ້ອງການວັດ.

4) ດໍາເນີນການສ້າງແບບທົດສອບຍ່ອຍປະຈໍາບົດສອນແຕ່ລະບົດທັງໝົດ 7 ບົດສອນໂດຍອີງໃສ່ຈຸດປະສົງແລະ ເນື້ອໃນທີ່ຕ້ອງການວັດ.

5) ນໍາແບບທົດສອບຍ່ອຍປະຈໍາບົດ ແລະ ແບບທົດສອບວັດຜົນສໍາເລັດທາງການຮຽນທີ່ສ້າງຂຶ້ນ ສະເໜີຕໍ່ອາຈານທີ່ປຶກສາ ເພື່ອກວດສອບຄວາມຖືກຕ້ອງເໝາະສົມ, ຄວາມຊັດເຈນ ແລະ ຄວາມສອດຄ່ອງກັບເນື້ອໃນແລະ ຈຸດປະສົງການຮຽນແລ້ວເອົາມາປັບປຸງແກ້ໄຂ.

6) ເອົາແບບທົດສອບວັດຜົນສໍາເລັດທາງການຮຽນທີ່ປັບປຸງແລ້ວສະເໜີຕໍ່ຜູ້ຊ່ຽວຊານເພື່ອປະເມີນຄວາມສອດຄ່ອງລະຫວ່າງຂໍ້ສອບແຕ່ລະຂໍ້ກັບຈຸດປະສົງການຮຽນຮູ້, ເຊິ່ງໃຫ້ຜູ້ຊ່ຽວຊານປະເມີນຄ່າດັດຊະນີຄວາມສອດຄ່ອງຂອງແບບທົດສອບໂດຍໃຊ້ຄ່າ (Index of Objective Congruence: IOC).

7) ນໍາເອົາແບບທົດສອບມາປັບປຸງ ແລະ ແກ້ໄຂຕາມການແນະນໍາຂອງຜູ້ຊານ ເພື່ອນໍາໄປໃຊ້ກັບນັກຮຽນ.

*3.2.3. ການສ້າງແບບສອບຖາມຄວາມເພິ່ງພໍໃຈ*

1) ສຶກສາວິທີສ້າງແບບສອບຖາມຄວາມເພິ່ງພໍໃຈແບບມາດຕາສ່ວນປະມານຄ່າ (Rating – Scale) 5 ລະດັບຕາມວິທີຂອງ (likert) ຈາກເອກະສານ ການວິໄຈເບື້ອງຕົ້ນ ຂອງ ຣສ ດຣ. ບຸນຊົມ ສີສະອາດ.

2) ກໍານົດຈຸດປະສົງ, ຮູບແບບຂອງແບບສອບຖາມວັດຄວາມເພິ່ງພໍໃຈຂອງນັກຮຽນຕໍ່ກັບການຈັດກິດຈະກໍາການສອນແບບ STAD ໃນວິຊາ ພາສາລາວ ກ່ຽວກັບປະເພດ ແລະ ໜ້າທີ່ຂອງຄໍາເວົ້າໃນພາສາລາວ ເປັນແບບມາດຕາສ່ວນປະມານຄ່າ 5 ລະດັບຄື:

ລະດັບ 5 ໝາຍເຖິງ ມີຄວາມເພິ່ງພໍໃຈ ຫຼາຍທີ່ສຸດ
ລະດັບ 4 ໝາຍເຖິງ ມີຄວາມເພິ່ງພໍໃຈ ຫຼາຍ
ລະດັບ 3 ໝາຍເຖິງ ມີຄວາມເພິ່ງພໍໃຈ ປານກາງ
ລະດັບ 2 ໝາຍເຖິງ ມີຄວາມເພິ່ງພໍໃຈ ໜ້ອຍ
ລະດັບ 1 ໝາຍເຖິງ ມີຄວາມເພິ່ງພໍໃຈ ໜ້ອຍທີ່ສຸດ
(ບຸນຊົມ ສີສະອາດ, 2554, ໜ້າ. 72)

3) ດໍາເນີນການສ້າງແບບສອບຖາມວັດຄວາມເພິ່ງພໍໃຈໃຫ້ຄອບຄຸມເນື້ອໃນແຕ່ລະດ້ານທີ່ຕາມທີ່ກໍານົດໄວ້ ໃນແຕ່ລະດ້ານຈໍານວນ 30 ຂໍ້.

4) ນໍາເອົາບົດແບບສອບຖາມທີ່ສ້າງຂຶ້ນ ໄປຜ່ານອາຈານທີ່ປຶກສາເພື່ອກວດສອບຄວາມຖືກຕ້ອງ, ຄວາມ ເໝາະສົມທາງດ້ານເນື້ອໃນ, ຈຸດປະສົງ. ຈາກນັ້ນ, ກໍນໍາເອົາແບບສອບຖາມມາປັບປຸງແກ້ໄຂຕາມຄໍາແນະນໍາຂອງອາຈານທີ່ປຶກສາ.

5) ນໍາເອົາແບບສອບຖາມທີ່ປັບປຸງແກ້ໄຂແລ້ວໄປຜ່ານຜູ້ຊ່ຽວຊານເພື່ອກວດສອບຄວາມສອດຄ່ອງຄວາມ ເໝາະສົມທາງດ້ານເນື້ອໃນ, ຈຸດປະສົງ ໂດຍໃຫ້ຜູ້ຊ່ຽວຊານປະເມີນຄ່າດັດຊະນີຄວາມສອດຄ່ອງຂອງບົດສອນໂດຍໃຊ້ຄ່າ (Index of Objective Congruence: IOC).

6) ນໍາເອົາແບບແບບສອບຖາມມາປັບປຸງ ແລະ ແກ້ໄຂຕາມການແນະນໍາຂອງຜູ້ຊານ ເພື່ອນໍາໄປໃຊ້ກັບນັກຮຽນ.

*3.3 ວິທີເກັບກໍາຂໍ້ມູນ*

ໃນການເກັບກໍາຂໍ້ມູນຄັ້ງນີ້ ແມ່ນໄດ້ຈັດຕັ້ງປະຕິບັດຢູ່ໃນສົກຮຽນ 2021 – 2022, ພາກຮຽນທີ 2, ຕັ້ງແຕ່ວັນທີ 25 ເມສາ - 19 ພຶດສະພາ 2022 ທີ່ໂຮງຮຽນມັດທະຍົມສາທິດວິທະຍາໄລຄູຫຼວງນໍ້າທາ ເຊິ່ງໄດ້ເກັບກໍາຂໍ້ມູນນໍານັກຮຽນ ຊັ້ນມັດທະຍົມປີທີ 2 ໂດຍປະຕິບັດຕາມຂັ້ນຕອນດັ່ງນີ້:

1) ຂໍໜັງສືສະເໜີອະນຸມັດລົງເກັບກໍາຂໍ້ມູນຈາກຜູ້ອໍານວຍການວິທະຍາໄລຄູ ແລ້ວນໍາສະເໜີຕໍ່ຜູ້ອໍານວຍການມັດທະຍົມ

ສາທິດ ເພື່ອຂໍອະນຸຍາດລົງເກັບກຳຂໍ້ມູນນຳນັກຮຽນມັດທະຍົມປີທີ 2.

2) ທົດລອງກັບນັກຮຽນ ຊັ້ນມັດທະຍົມປີທີ 2 ດ້ວຍການນຳໃຊ້ກິດຈະກຳການຮຽນຮູ້ແບບແບບ STAD ທີ່ຜູ້ຄົ້ນຄວ້າໄດ້ສ້າງຂຶ້ນ.

3) ກ່ອນການດຳເນີນການສອນຕົວຈິງແມ່ນໄດ້ມີການທົດສອບກ່ອນຮຽນ (Pretest) ກັບນັກຮຽນ ໂດຍໃຊ້ແບບທົດສອບວັດຄວາມສາມາດໃນການຮຽນ (ແບບທົດສອບລວມ) ທີ່ກຽມໄວ້.

4) ດຳເນີນການສອນຕົວຈິງຕາມບົດສອນດ້ວຍການນຳໃຊ້ກິດຈະກຳການຮຽນຮູ້ແບບ STAD (ບົດສອນທີ 1, 2, 3, 4, 5, 6, 7) ທີ່ໄດ້ກຽມໄວ້ຕາມລຳລັບ, ເມື່ອສຳເລັດການສອນແຕ່ລະບົດສອນແລ້ວໄດ້ເຮັດການທົດສອບຍ່ອຍ ຫຼື ທົດສອບປະຈຳແຕ່ລະບົດສອນ.

5) ຫຼັງຈາກສຳເລັດການສອນທຸກບົດສອນແລ້ວ ກໍເຮັດການທົດສອບຫຼັງຮຽນ (Posttest) ເຊິ່ງແມ່ນແບບທົດສອບດຽວກັນກັບແບບທົດສອບກ່ອນຮຽນ.

6) ຫຼັງຈາກສຳເລັດການທົດສອບຫຼັງຮຽນແລ້ວ ກໍແຈກຢາຍແບບສອບຖາມຄວາມເພິ່ງພໍໃຈໃຫ້ນັກຮຽນສະແດງຄວາມຄິດເຫັນຕໍ່ກັບການຈັດກິດຈະກຳການຮຽນການສອນ ວິຊາພາສາລາວ ກ່ຽວກັບປະເພດ ແລະ ໜ້າທີ່ຂອງຄຳເວົ້າ ໂດຍນຳໃຊ້ວິທີສອນແບບ STAD.

7) ນຳເອົາຂໍ້ມູນທີ່ໄດ້ຈາກເຄື່ອງມືແຕ່ລະຊະນິດມາກວດຄືນຄວາມຖືກຕ້ອງ ແລະ ລວບລວມເພື່ອນຳໄປວິເຄາະຜົນຂອງການຄົ້ນຄວ້າ.

### *3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

*ການວິເຄາະຂໍ້ມູນ:*

ຫຼັງຈາກເກັບກຳຂໍ້ມູນສຳເລັດແລ້ວກໍໄດ້ນຳເອົາຂໍ້ມູນມາຈັດລຽງເປັນແຕ່ລະປະເພດໂດຍວິເຄາະຫາຄ່າຕ່າງໆດັ່ງນີ້:

1) ວິເຄາະຫາປະສິດທິພາບຂອງບົດສອນໂດຍຫາຄ່າປະສິດທິພາບຂອງຂະບວນການຮຽນ $E_1$ ແລະ ປະສິດທິພາບຜົນສຳເລັດທາງການຮຽນ $E_2$. ເຊິ່ງປະຕິບັດດັ່ງນີ້:

- ນຳຜົນຄະແນນຂອງນັກຮຽນທີ່ໄດ້ຈາກການເຮັດແບບທົດສອບຍ່ອຍທັງ 7 ສະບັບມາຫາຄ່າປະສິດທິພາບຂອງຂະບວນການຮຽນ ( $E_1$) ຕາມສູດ ( $E_1$) ຂອງ (ບຸນຊົມ ສີສະອາດ, 2546, ໜ້າ. 154-155) ດັ່ງນີ້:

- ນຳເອົາຄະແນນຂອງນັກຮຽນທີ່ໄດ້ຈາກການເຮັດແບບທົດສອບລວມຫຼັງການສອນທັງໝົດມາຊອກຫາປະສິດທິພາບຂອງຜົນສຳເລັດທາງການຮຽນ ( $E_2$)

- ນຳຜົນຂອງຄ່າປະສິດທິພາບຂອງຂະບວນການ ($E_1$) ແລະ ປະສິດທິພາບຂອງຜົນສຳເລັດທາງການຮຽນ ( $E_2$) ມາທຽບໃສ່ກັນແລ້ວວິເຄາະຫາຜົນປະສິດທິພາບທັງສອງ ໂດຍທຽບໃສ່ເກນທີ່ຕັ້ງໄວ້ຄື: 80/80

2) ວິເຄາະຫາຄ່າດັດຊະນີປະສິດທິຜົນການຮຽນຮູ້ຂອງນັກຮຽນ E.I ເຊິ່ງປະຕິບັດດັ່ງນີ້:

- ນຳເອົາຜົນຄະແນນທີ່ໄດ້ຈາກການທົດສອບກ່ອນສອນ ແລະ ຫຼັງສອນ ຂອງນັກຮຽນມາຄິດໄລ່ຫາຄ່າດັດສະນີປະສິດທິຜົນ (E.I) ຕາມສູດຂອງ (ບຸນຊົມ ສີສະອາດ, 2546, p. 159) ຂອງການຊອກຫາດັດສະນີປະສິດທິຜົນ

- ແປຜົນຄ່າປະສິດທິຜົນການຮຽນຮູ້ຂອງນັກຮຽນ ໂດຍທຽບກັບສົມມຸດຖານທີ່ຕັ້ງໄວ້.

3) ວິເຄາະຫາຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການການຮຽນການສອນແບບ STAD ໂດຍການຊອກຫາຄ່າສະເລ່ຍ (Mean) ໂດຍໃຊ້ສູດ (ບຸນຊົມ ສີສະອາດ, 2545) ແລະ ຄ່າຜັນປ່ຽນມາດຕະຖານ (SD) ຕາມສູດຂອງ (ບຸນຊົມ ສີສະອາດ, 2554, p. 126) ຂອງຄະແນນທີ່ໄດ້ຈາກແບບສອບຖາມ.

- ແປຜົນຄ່າສະເລ່ຍຂອງແຕ່ລະຂໍ້ທີ່ໄດ້ຈາກແບບສອບຖາມຄວາມເພິ່ງພໍໃຈຂອງນັກຮຽນໂດຍທຽບຕາມເກນທີ່ຕັ້ງໄວ້ຄື :

ຄ່າສະເລ່ຍ 4.51 – 5.00 ໝາຍເຖິງມີຄວາມເພິ່ງພໍໃຈຫຼາຍທີ່ສຸດ

ຄ່າສະເລ່ຍ 3.51 – 4.50 ໝາຍເຖິງມີຄວາມເພິ່ງພໍໃຈຫຼາຍ

ຄ່າສະເລ່ຍ 2.51 – 2.50 ໝາຍເຖິງມີຄວາມເພິ່ງພໍໃຈປານກາງ

ຄ່າສະເລ່ຍ 1.51 –2.50 ໝາຍເຖິງມີຄວາມເພິ່ງພໍໃຈໜ້ອຍ

ຄ່າສະເລ່ຍ 1.00 –1.50 ໝາຍເຖິງມີຄວາມເພິ່ງພໍໃຈໜ້ອຍທີ່ສຸດ (ບຸນຊົມ ສີສະອາດ, 2545, p. 103)

*ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາປະກອບມີດັ່ງນີ້:*

1. ສະຖິຕິທີ່ໃຊ້ວິເຄາະຊອກຫາຄຸນນະພາບຂອງເຄື່ອງມື

ຊອກຫາຄ່າຄວາມສອດຄ່ອງ (Validity) ຂອງບົດສອນ, ແບບທົດສອບ, ແບບສອບຖາມ ໂດຍໃຊ້ສູດຄ່າຄວາມສອດຄ່ອງ Index of Item Objective Congrence

(IOC) (ສົມນຶກ ພັດທິຍະທະນີ, 2551, p. 221)

$$IOC = \frac{\sum R}{N}$$

*IOC* ແທນ ດັດຊະນີຄວາມສອດຄ່ອງລະຫວ່າງຂໍ້ສອບກັບຈຸດປະສົງຂອງການຮຽນຮູ້

$\sum R$ ແທນ ຜົນລວມຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານທັງໝົດ

*N* ແທນ ຈຳນວນຜູ້ຊ່ຽວຊານ

2. ສະຖິຕິພື້ນຖານໃນການວິເຄາະຂໍ້ມູນ

1) ເປີເຊັນ (Percenttage)

$$P = \frac{F}{N} 100$$

P ແທນ ເປີເຊັນ

F ແທນ ຄວາມຖີ່ທີ່ຕ້ອງການແປງໃຫ້ເປັນເປີເຊັນ

N ແທນຈຳນວນເຕັມ (ບຸນຊົມ ສີສະອາດ, 2554, ໜ້າ. 122)

2) ຄ່າສະເລ່ຍ (Arithmetic)

$$\overline{X} = \frac{\sum X}{N}$$

$\overline{X}$ ແທນ ຄ່າສະເລ່ຍ

$\sum X$ ແທນ ຜົນລວມຂອງຄະແນນທັງໝົດໃນກຸ່ມ

$N$ ແທນ ຈຳນວນັກຮຽນໃນກຸ່ມ

(ສຸວິມົນ ຕີລະພານັນ, 2550)

3) ຄ່າຜັນປ່ຽນມາດຕະຖານ (Standard Deviation) ຕາມສູດ (ບຸນຊົມ ສີສະອາດ, 2546, ໜ້າ. 126)

$$SD = \sqrt{\frac{N\sum X^2 - \left(\sum X\right)^2}{N\left(N-1\right)}}$$

S.D ແທນ ຄ່າຜັນປ່ຽນມາດຕະຖານ

X ແທນ ຄະແນນແຕ່ລະຕົວ

N ແທນ ຈຳນວນຄົນໃນກຸ່ມ

$\sum X^2$ ແທນ ຜົນບວກຂອງຄະແນນແຕ່ລະຕົວຂຶ້ນກຳລັງສອງ

3. ສະຖິຕິທີ່ໃຊ້ວິເຄາະຫາປະສິດທິພາບຂອງບົດສອນ

ໂດຍໃຊ້ສູດ ( $E_1 / E_2$) ດັ່ງນີ້:

$$E_1 = \frac{\frac{\sum x}{N}}{A} \times 100$$

$E_1$ ແທນ ປະສິດທິພາບຂອງຂະບວນການຮຽນຮູ້

$\sum x$ ແທນ ຜົນບວກຂອງຄະແນນແບບທົດສອບຍ່ອຍທຸກຊຸດລວມກັນ

N ແທນ ຈຳນວນນັກຮຽນທັງໝົດ

$A$ ແທນ ຄະແນນເຕັມຂອງການທົດສອບຍ່ອຍທຸກຊຸດລວມກັນ

$$E_2 = \frac{\frac{\sum X}{N}}{B} \times 100$$

$E_2$ ແທນ ປະສິດທິພາບຂອງຜົນສຳເລັດທາງການຮຽນ

$\sum x$ ແທນ ຜົນບວກຂອງຄະແນນແບບທົດສອບຫຼັງຮຽນ

N ແທນ ຈຳນວນນັກຮຽນທັງໝົດ

$B$ ແທນ ຄະແນນເຕັມຂອງການທົດສອບຫຼັງຮຽນ (ບຸນຊົມ ສີສະອາດ, 2546, ໜ້າ. 154-155)

4. ສະຖິຕິທີ່ໃຊ້ວິເຄາະຫາຄ່າປະສິດທິຜົນການຮຽນຮູ້ຂອງນັກຮຽນ (E.I)

$$E.I = \frac{P_2 - P_1}{Total - P_1}$$

E.I ແທນ ດັດສະນະປະສິດທິຜົນ

$P_1$ ແທນ ຜົນລວມຂອງຄະແນນກ່ອນຮຽນຂອງທຸກຄົນ

$P_2$ ແທນ ຜົນລວມຂອງຄະແນນຫຼັງຮຽນຂອງທຸກຄົນ

$Total$ ແທນ ຜົນຄູນຂອງຈຳນວນນັກຮຽນກັບຄະແນນເຕັມ

## 4. ຜົນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງເພື່ອສຶກສາການຈັດການຮຽນການສອນ ວິຊາ ພາສາລາວ ໂດຍໃຊ້ວິທີສອນແບບ STAD ສຳລັບຊັ້ນມັດທະຍົມປີທີ2 ທີ່ໂຮງຮຽນມັດທະຍົມສາທິດ, ພາກຮຽນທີ 2 ສົກຮຽນ 2021 – 2022. ດັ່ງນັ້ນ, ຜູ້ວິໄຈຈຶ່ງຂໍນຳສະເໜີຜົນການວິເຄາະຂໍ້ມູນດັ່ງນີ້:

1. ຜົນການວິເຄາະຫາປະສິດທິພາບບົດສອນ
2. ຜົນການວິເຄາະຫາປະສິດທິຜົນການຮຽນຮູ້ຂອງນັກຮຽນ

3. ຜົນການວິເຄາະຫາຄວາມເພິ່ງພໍໃຈຂອງນັກຮຽນຕໍ່ກັບການຮຽນ - ການສອນແບບ STAD ເຊິ່ງລາຍລະອຽດຈະນໍາສະເໜີດັ່ງຕໍ່ໄປນີ້:

*4. 1 ຂໍ້ມູນພື້ນຖານຂອງກຸ່ມຕົວຢ່າງ*

ຈໍານວນຜູ້ເຂົ້າຮ່ວມໃຫ້ຂໍ້ມູນໃນການຄົ້ນຄວ້າຄັ້ງນີ້ປະກອບມີທັງໝົດ 15 ຄົນ ໃນນັ້ນມີເພດຍິງ 7 ຄົນ ກວມເອົາ 46.67% ແລະ ເພດຊາຍ 8 ຄົນ ກວມເອົາ 53.33% (ເບິ່ງຕາຕະລາງທີ 2)

ຕາຕະລາງທີ 2: ຈໍານວນຜູ້ໃຫ້ຂໍ້ມູນ

| ລ/ດ | ເພດ | ຈໍານວນ | ເປີເຊັນ |
|---|---|---|---|
| 1 | ຍິງ | 7 | 46.67 |
| 2 | ຊາຍ | 8 | 53.33 |
| ລວມ | | 15 | 100 |

*4.2 ຜົນການວິເຄາະຫາປະສິດທິພາບຂອງບົດສອນ*

ປະສິດທິພາບຂອງຂະບວນການຮຽນ ໂດຍນໍາໃຊ້ກິດຈະກໍາການຮຽນຮູ້ແບບ STAD ເຂົ້າໃນ ວິຊາພາສາລາວ ປະສິດທິພາບຂອງຂະບວນການສອນລວມທັງ 7 ບົດສອນມີຄື: $\bar{X}$ = 35.41, S.D = 0.88 ແລະ $E_1$ = 84.28 ເມື່ອຈໍາແນກແຕ່ລະບົດສອນແລ້ວພົບວ່າ: (ເບິ່ງຕາຕະລາງທີ 3)

ຕາຕະລາງທີ 3: ປະສິດທິພາບຂອງຂະບວນການສອນທັງ 7 ບົດ

| ບົດສອນ 7 ບົດ | **ປະສິດທິພາບຂອງຂະບວນການ** |
|---|---|
| ບົດສອນທີ 1: | ປະສິດທິພາບຂອງຂະບວນການ $\bar{X}$ = 4.80, S.D = 0.86 ແລະ $E_1$ = 80.00 |
| ບົດສອນທີ 2: | ມີປະສິດທິພາບຂອງຂະບວນການ $\bar{X}$ = 4.87, S.D = 0.99 ແລະ $E_1$ = 81.11 |
| ບົດສອນທີ 3: | ມີປະສິດທິພາບຂອງຂະບວນການ $\bar{X}$ = 5.13, S.D = 0.99 ແລະ $E_1$ = 85.55 |
| ບົດສອນທີ 4: | ມີປະສິດທິພາບຂອງຂະບວນການ $\bar{X}$ = 5.27, S.D = 0.88 ແລະ $E_1$ = 87.77 |
| ບົດສອນທີ 5: | ມີປະສິດທິພາບຂອງຂະບວນການ $\bar{X}$ = 5.20, S.D = 0.77 ແລະ $E_1$ = 86.66 |
| ບົດສອນທີ 6: | ມີປະສິດທິພາບຂອງຂະບວນການ $\bar{X}$ = 4.87, S.D = 0.99 ແລະ $E_1$ = 81.11 |
| ບົດສອນທີ 7: | ມີປະສິດທິພາບຂອງຂະບວນການ $\bar{X}$ = 5.27, S.D = 0.70 ແລະ $E_1$ = 87.77 |
| ລວມ 7 ບົດສອນ | ມີປະສິດທິພາບຂອງຂະບວນການ $\bar{X}$ = 35.41, S.D = 0.88 ແລະ $E_1$ = 84.28 |

ຕາຕະລາງທີ 4: ສະແດງຄ່າປະສິດທິພາບຂອງບົດສອນ ( $E_1 / E_2$) ທຽບໃສ່ເກນ 80/80

| ປະສິດທິພາບຂອງບົດສອນ | ຄະແນນລວມ | $\bar{X}$ | S.D | $E_1 / E$ |
|---|---|---|---|---|
| ປະສິດທິພາບຂອງຂະບວນການຮຽນ $E_1$ | 531 | 35.4 | 2.99 | 84.28 |
| ປະສິດທິພາບຂອງຜົນການຮຽນ $E_2$ | 545 | 36.33 | 1.58 | 90.83 |

ຈາກຕາຕະລາງ 4 ພົບວ່າ: ປະສິດທິພາບຂອງການສອນ ວິຊາພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄໍາເວົ້າໃນພາສາລາວ ໂດຍການນໍາໃຊ້ວິທີສອນແບບ STAD ສໍາລັບນັກຮຽນຊັ້ນມັດທະຍົມປີທີ 2 ທີ່ມັດທະຍົມສາທິດ ວິທະຍາໄລຄູຫຼວງນໍ້າທາ ຈາກຜົນໄດ້ຮັບຂອງ $E_1$/ $E_2$ເຫັນວ່າ: ປະສິດທິພາບຂອງຂະບວນການຮຽນ $E_1$= 84.28 ແລະ ປະສິດທິພາບຂອງຜົນສໍາເລັດທາງການຮຽນ $E_2$= 90.83. ດັ່ງນັ້ນ, ສາມາດສະຫຼຸບໄດ້ວ່າ: ການຈັດການຮຽນການສອນ ວິຊາ ພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄໍາເວົ້າໃນພາສາລາວ ຂອງນັກຮຽນ ຊັ້ນມັດທະຍົມປີທີ 2 ໂດຍນໍາໃຊ້ວິທີສອນແບບ STAD ແມ່ນມີປະສິດທິພາບ $E_1$/ $E_2$= 84.28/90.83 ເຊິ່ງສູງກວ່າເກນ 80/80 ທີ່ຕັ້ງໄວ້.

*4.3 ຜົນການວິເຄາະຫາປະສິດທິຜົນການຮຽນຮູ້ຂອງນັກຮຽນ*

ຕາຕະລາງທີ 5: ສະແດງຜົນການວິເຄາະຫາດັດຊະນີປະສິດທິຜົນການຮຽນຮູ້ຂອງນັກຮຽນ

| ຈຳນວນນັກຮຽນ | ຄະແນນເຕັມຫຼັງຮຽນ | ຜົນລວມຂອງຄະແນນ (ຄະແນນເຕັມ750) | | ດັດຊະນີປະສິດທິຜົນ (E.I) |
|---|---|---|---|---|
| | | ຄະແນນທົດສອບກ່ອນຮຽນ | ຄະແນນທົດສອບຫຼັງຮຽນ | |
| 15 | 40 | 253 | 545 | 0.841 |

ຈາກຕາຕະລາງທີ 5 ພົບວ່າ: ຄ່າດັດຊະນີປະສິດທິຜົນການຮຽນຮູ້ຂອງນັກຮຽນ (E.I) ມີຄ່າເທົ່າກັບ 0.841 ສະແດງວ່າຫຼັງຈາກທີ່ນັກຮຽນໄດ້ຮັບການສອນໂດຍວິທີສອນແບບ STAD ແລ້ວນັກຮຽນມີຄວາມກ້າວໜ້າທາງການຮຽນເພີ່ມຂຶ້ນ 0.841 ຫຼືຄິດເປັນເປີເຊັນເທົ່າກັບ 84.1%.

*4.4 ຜົນການວິເຄາະຂໍ້ມູນກ່ຽວກັບຄວາມເພິງພໍໃຈຂອງນັກຮຽນ*

ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານລວມຄວາມເພິງພໍໃຈຂອງນັກຮຽນທີ່ມີຕໍ່ການຮຽນການສອນໂດຍໃຊ້ວິທີສອນແບບ STAD ໃນວິຊາ ພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າ ສະເລ່ຍທັງ 3 ດ້ານເມື່ອທຽບກັບເກນແລ້ວ ແມ່ນຢູ່ໃນລະດັບເພິງພໍໃຈຫຼາຍ (ເບິ່ງຕາຕະລາງທີ 5)

ຕາຕະລາງທີ 5: ສະແດງຜົນການວິເຄາະຄວາມເພິງພໍໃຈຂອງນັກຮຽນຕໍ່ກັບການຮຽນການສອນ ວິຊາ ພາສາລາວ ທັງ 3 ດ້ານ

| ລ/ດ | ລາຍການປະເມີນ | ລະດັບຄວາມຄິດເຫັນ | | |
|---|---|---|---|---|
| | | $\overline{X}$ | S.D | **ແປຜົນ** |
| 1 | ດ້ານບັນຍາກາດການຮຽນ - ການສອນ | 4.11 | 0.58 | ເພິງພໍໃຈຫຼາຍ |
| 2 | ດ້ານການຈັດກິດຈະກຳການຮຽນ - ການສອນ | 3.9 | 0.55 | ເພິງພໍໃຈຫຼາຍ |
| 3 | ດ້ານປະໂຫຍດທີ່ໄດ້ຮັບຈາກການຈັດການຮຽນ - ການສອນ | 3.82 | 0.58 | ເພິງພໍໃຈຫຼາຍ |
| | **ລວມ** | **3.94** | **0.57** | **ເພິງພໍໃຈຫຼາຍ** |

ຈາກຕາຕະລາງທີ 5 ພົບວ່າ: ນັກຮຽນ ຊັ້ນມັດທະຍົມປີທີ 2 ທີ່ມັດທະຍົມສາທິດ ມີຄວາມເພິງພໍໃຈຕໍ່ກັບການຈັດກິດຈະກຳການຮຽນການສອນແບບ STAD ໃນວິຊາ ພາສາລາວ ກ່ຽວກັບປະເພດ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ໂດຍລວມແມ່ນຢູ່ໃນລະດັບເພິງພໍໃຈຫຼາຍ, ເຊິ່ງມີຄ່າສະເລ່ຍລວມເທົ່າ $\overline{X}$ = 3.94 ແລະ ຄ່າຜັນປ່ຽນມາດຕະຖານ SD=0.57, ເມື່ອພິຈາລະນາເບິ່ງໃນແຕ່ລະດ້ານແລ້ວເຫັນວ່າ: ດ້ານບັນຍາກາດການຮຽນ - ການສອນ ມີຄະແນນສູງກວ່າໝູ່ ເຊິ່ງມີຄ່າສະເລ່ຍ $\overline{X}$ = 4.11 ແລະ ຄ່າຜັນປ່ຽນມາດຕະຖານ SD=0.58, ຮອງລົງມາແມ່ນດ້ານການຈັດກິດຈະກຳການຮຽນການສອນ ເຊິ່ງມີຄ່າສະເລ່ຍ $\overline{X}$ =3.90 ແລະ ຄ່າຜັນປ່ຽນມາດຕະຖານ SD=0.55 ແລະດ້ານປະໂຫຍດທີ່ໄດ້ຮັບຈາກການຈັດການຮຽນ-ການສອນມີຄະແນນໜ້ອຍກວ່າໝູ່ ເຊິ່ງມີຄ່າສະເລ່ຍ $\overline{X}$ =3.82 ແລະ ຄ່າຜັນປ່ຽນມາດຕະຖານ SD=0.58.

## 5. ອະພິປາຍຜົນ

ຈາກການສຶກສາຄົ້ນຄວ້າກ່ຽວກັບການນຳໃຊ້ວິທີສອນແບບ STAD ເຂົ້າໃນການຈັດການຮຽນການສອນ ວິຊາພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າ ຂອງນັກຮຽນມັດທະຍົມປີທີ 2, ທີ່ໂຮງຮຽນມັດທະຍົມສາທິດ ສາມາດອະພິປາຍຜົນໄດ້ດັ່ງນີ້:

1) ປະສິດທິພາບຂອງບົດສອນທີ່ໄດ້ຈາກການຈັດກິດຈະກຳການຮຽນການສອນ ວິຊາ ພາສາລາວ ກ່ຽວກັບປະເພດ ແລະ ໜ້າທີ່ຂອງຄຳເວົ້າ ໂດຍໃຊ້ວິທີສອນແບບ STAD ສຳລັບນັກຮຽນມັດທະຍົມປີທີ 2, ທີ່ໂຮງຮຽນມັດທະຍົມສາທິດ ມີປະສິດທິພາບເທົ່າກັບ $E_1/E_2$= 84.28/90.83 ເຊິ່ງສູງກວ່າເກນ 80/80 ທີ່ຕັ້ງໄວ້ ທັງນີ້ກໍເນື່ອງຈາກວ່າ: ເວລາດຳເນີນການສອນຕົວຈິງໃນແຕ່ລະບົດສອນຂອງຜູ້ຄົ້ນຄວ້າ ແມ່ນໄດ້ປະຕິບັດຕາມ 5 ຂັ້ນຕອນຂອງການສອນແບບ STAD ເປັນຢ່າງດີ, ຜູ້ສອນໄດ້ມີການຈັດກຽມເນື້ອໃນບົດຮຽນ, ກຽມກິດຈະກຳໃຫ້ນັກຮຽນໄດ້ປະຕິບັດ, ຜູ້ສອນໄດ້ຈັດກິດຈະກຳໃຫ້ນັກຮຽນໄດ້ຮຽນຮູ້ໂດຍການລົງມືປະຕິບັດສິ່ງຕ່າງໆດ້ວຍຕົນເອງ ໂດຍຜ່ານການເຮັດວຽກຮ່ວມກັນເປັນກຸ່ມ, ແຕ່ລະກຸ່ມມີສະມາຊິກບໍ່ຫຼາຍເວລາປະຕິບັດກິດຈະກຳແມ່ນເນັ້ນໃຫ້ມີການແບ່ງວຽກກັນປະຕິບັດ, ໃນກຸ່ມໜຶ່ງໆປະກອບດ້ວຍຜູ້ຮຽນທີ່ມີຄວາມສາມາດທາງການຮຽນທີ່ແຕກຕ່າງກັນ, ຊ່ວຍເຫຼືອກັນ, ຮ່ວມກັນເຮັດວຽກທີ່ໄດ້ຮັບມອບໝາຍຈົນປະສົບຜົນສຳເລັດ. ໃນຂະນະຮຽນແມ່ນໃຫ້ສະມາຊິກໃນກຸ່ມໄດ້ຊ່ວຍເຫຼືອກັນໃນການເຮັດກິດຈະກຳໃນເນື້ອໃນນັ້ນໆ, ແຕ່ເມື່ອຈົບບົດຮຽນແລ້ວແມ່ນໄດ້ທົດສອບເປັນລາຍບຸກຄົນແລ້ວນຳຄະແນນມາສະເລ່ຍເປັນຄະແນນຂອງກຸ່ມ, ມີການປະກາດຄະແນນຂອງກຸ່ມ, ກຸ່ມໃດມີຄະແນນສະເລ່ຍເຖິງ

ເກນທີ່ກຳນົດໄວ້ຈະໄດ້ຮັບລາງວັນ ເຊິ່ງເປັນປັດໃຈໜຶ່ງທີ່ສົ່ງຜົນໃຫ້ນັກຮຽນມີຄວາມຫ້າວຫັນກະຕືລືລົ້ນຕໍ່ກັບການຮຽນ ແລະ ແຂ່ງຂັນກັນປະຕິບັດກິດຈະກຳ, ສາມາດຈັບໃຈຄວາມສຳຄັນຂອງບົດຮຽນ ແລະ ສາມາດຕອບແບບທົດສອບໄດ້ ເຊິ່ງເປັນຜົນເຮັດໃຫ້ການຮຽນການສອນໃນຄັ້ງນີ້ມີປະສິດທິພາບດີ. ອີງໃສ່ຜົນໄດ້ຮັບຈາກການປະຕິບັດກິດຈະກຳການຮຽນການສອນໃນຄັ້ງນີ້ສາມາດຢັ້ງຢືນໄດ້ວ່າ: ທຸກຂັ້ນຕອນຂອງການຮຽນການສອນໃນຮູບແບບຂອງ STAD ນີ້ ແມ່ນໄດ້ສົ່ງເສີມໃຫ້ຜູ້ຮຽນໄດ້ສຶກສາຄົ້ນຄວ້າຫາຄວາມຮູ້ດ້ວຍຕົນເອງ, ສົ່ງເສີມໃຫ້ຜູ້ຮຽນໄດ້ເຝິກທັກສະຂະບວນການທາງສັງຄົມ ເຊັ່ນ: ທັກສະຂະບວນການກຸ່ມ, ທັກສະການຮຽນເປັນຜູ້ນຳ ແລະ ເຝິກຄວາມຮັບຜິດຊອບ ເຊິ່ງສົ່ງຜົນໃຫ້ນັກຮຽນທຸກຄົນມີຜົນສຳເລັດທາງການຮຽນທີ່ດີ ແລະ ເຫັນວ່າຜົນໄດ້ຮັບຈາກການຄົ້ນຄວ້າໃນຄັ້ງນີ້ແມ່ນສອດຄ່ອງກັບ (ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ, 2545, ໜ້າ. 170) ທີ່ໄດ້ກ່າວໄວ້ວ່າ: ການຈັດການຮຽນການສອນໂດຍໃຊ້ວິທີສອນແບບຮ່ວມມືເຕັກນິກ STAD ເປັນການຮຽນຮູ້ແບບຮ່ວມມືກັນອີກຮູບແບບໜຶ່ງທີ່ແບ່ງຜູ້ຮຽນທີ່ມີຄວາມສາມາດແຕກຕ່າງກັນອອກເປັນກຸ່ມເພື່ອເຮັດວຽກຮ່ວມກັນ ກຸ່ມໜຶ່ງປະມານ 4-5 ຄົນ ໂດຍກຳນົດໃຫ້ສະມາຊິກຂອງກຸ່ມໄດ້ຮຽນຮູ້ໃນເນື້ອໃນບົດຮຽນທີ່ຜູ້ສອນຈັດກຽມໄວ້ແລ້ວເຮັດການທົດສອບຄວາມຮູ້, ຄະແນນທີ່ໄດ້ຈາກການທົດສອບຂອງສະມາຊິກແຕ່ລະຄົນນຳເອົາມາບວກເປັນຄະແນນລວມຂອງທີມ, ຜູ້ສອນຈະຕ້ອງໃຊ້ເຕັກນິກເສີມແຮງ ເຊັ່ນ: ໃຫ້ລາງວັນ, ຄຳຊົມເຊີຍເພື່ອເປັນສິ່ງຈູງໃຈໃຫ້ຜູ້ຮຽນມີຄວາມກະຕືລືລົ້ນໃນການຮຽນ. ນອກນັ້ນ, ຍັງສອດຄ່ອງກັບສິດທິສອນ ສຸກໄຊສະຫວັດ (2018) ໄດ້ສຶກສາເລື່ອງການນຳໃຊ້ວິທີສອນແບບ STAD ເຂົ້າໃນການຈັດການຮຽນ - ການສອນວິຊາພາສາລາວ ເລື່ອງການຂຽນຂອງນັກຮຽນຊັ້ນ ມ.5 ໂຮງຮຽນມັດທະຍົມສຶກສາຍົມມະລາດ ແຂວງຄຳມ່ວນ ຜົນການຄົ້ນຄວ້າວິໄຈພົບວ່າ: ປະສິດທິພາບຂອງບົດສອນ $E_1/E_2$= 83.39/83.98 ເຊິ່ງສູງກວ່າເກນທີ່ກຳນົດໄວ້ຄື 80/80.

2) ດັດຊະນີປະສິດທິຜົນການຮຽນຮູ້ຂອງນັກຮຽນ ໃນວິຊາ ພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າ ໂດຍນຳໃຊ້ວິທີສອນແບບ STAD ສຳລັບນັກຮຽນມັດທະຍົມປີທີ 2, ທີ່ໂຮງຮຽນມັດທະຍົມສາທິດ ມີຄ່າເທົ່າກັບ 0.841, ໝາຍຄວາມວ່າ ນັກຮຽນມີຄວາມກ້າວໜ້າໃນການຮຽນຫຼັງການຮຽນການສອນ ຄິດເປັນເປີເຊັນເທົ່າກັບ 84.1%. ທັງນີ້ກໍເນື່ອງມາຈາກການຮຽນການສອນໂດຍການນຳໃຊ້ວິທີສອນແບບ STAD ເຊິ່ງເປັນວິທີສອນໜຶ່ງທີ່ມີການຈັດການຈັດການຮຽນ - ການສອນທີ່ເນັ້ນສະພາບແວດລ້ອມທາງການຮຽນຂອງນັກຮຽນໄດ້ຮຽນຮູ້ເປັນກຸ່ມນ້ອຍປະກອບດ້ວຍສະມາຊິກທີ່ມີຄວາມຮູ້ຄວາມສາມາດແຕກຕ່າງກັນ, ແຕ່ລະຄົນມີສ່ວນຮ່ວມຢ່າງແທ້ຈິງໃນການຮຽນຮູ້ ແລະ ໃນຄວາມສຳເລັດຂອງກຸ່ມ, ມີການແລກປ່ຽນຄຳຄິດຄຳເຫັນ ແລະ ມີການໃຫ້ກຳລັງໃຈເຊິ່ງກັນ ແລະ ກັນເພື່ອຄວາມສຳເລັດຂອງກຸ່ມ, ເປັນການຈັດກິດຈະກຳການຮຽນ - ການສອນທີ່ກະຕຸ້ນໃຫ້ນັກຮຽນມີການຄົ້ນຄິດດ້ວຍຕົນເອງ ແລະ ຮ່ວມກັບກຸ່ມຢ່າງເປັນລະບົບໂດຍກຳນົດໃຫ້ສະມາຊິກຂອງກຸ່ມໄດ້ຮຽນຮູ້ເນື້ອໃນບົດຮຽນທີ່ຜູ້ສອນຈັດກຽມໃຫ້ ແລ້ວເຮັດການທົດສອບຄວາມຮູ້, ຄະແນນທີ່ໄດ້ຈາກການທົດສອບຂອງສະມາຊິກແຕ່ລະຄົນນຳເອົາມາບວກເປັນຄະແນນລວມຂອງກຸ່ມ. ໃນນັ້ນ, ນັກຮຽນໄດ້ມີການແລກປ່ຽນຄວາມຄິດຄວາມເຫັນກັບສະມາຊິກພາຍໃນກຸ່ມ ແລະ ຜູ້ອື່ນໃນຫ້ອງ ໂດຍຄູເປັນຜູ້ຄອຍແນະນຳ, ຄອຍກະຕຸ້ນໃຫ້ນັກຮຽນໄດ້ຮູ້ຕັ້ງຄຳຖາມ, ຕອບຄຳຖາມຕໍ່ສິ່ງທີ່ຕ້ອງການຮູ້, ຄູໄດ້ເປີດໂອກາດໃຫ້ຜູ້ຮຽນ ໄດ້ໃຊ້ຄວາມຄິດຮ່ວມກັນ ແລກປ່ຽນປະສົບການຄວາມຄິດ, ເຫດຜົນເຊິ່ງກັນ ແລະ ກັນ ເຮັດໃຫ້ນັກຮຽນທຸກຄົນສາມາດປະຕິບັດກິດຈະກຳໄດ້ດ້ວຍຕົນເອງ ເຊິ່ງຜົນທີ່ໄດ້ຮັບໃນຄັ້ງນີ້ ແມ່ນສອດຄ່ອງກັບບົດຄົ້ນຄວ້າຂອງ (ບຸນຍືນ ວົງໄພໂລດ, 2015) ໄດ້ສຶກສາການຈັດການຮຽນການສອນ ເລື່ອງຄຳ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ໂດຍໃຊ້ວິທີສອນແບບ STAD ສຳລັບນັກສຶກສາ ປີທີ 1 ລະບົບ 12+4 ສາຍຄູພາສາລາວ-ວັນນະຄະດີ ທີ່ວິທະຍາໄລຄູຫຼວງພະບາງ ຜົນການຄົ້ນຄວ້າພົບວ່າ: ດັດສະນີປະສິດທິຜົນການຮຽນຮູ້ຂອງນັກນຶກສາເລື່ອງຄຳ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວໂດຍນຳໃຊ້ວິທີສອນແບບ STAD ມີຄ່າເທົ່າກັບ 0.88 ຄິດເປັນເປີເຊັນເທົ່າກັບ 88% ສະແດງວ່າ ນັກສຶກສາມີອັດຕາການຮຽນຮູ້ກ້າວ ໜ້າຂຶ້ນຈາກພື້ນຖານຄວາມຮູ້ເດີມທີ່ມີຢູ່ແລ້ວ.

3) ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການຮຽນການສອນວິຊາພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ໂດຍໃຊ້ວິທີສອນແບບ STAD ສຳລັບນັກຮຽນມັດທະຍົມປີທີ 2, ທີ່ໂຮງຮຽນມັດທະຍົມສາທິດ ມີຄ່າສະເລ່ຍເທົ່າກັບ $\overline{X}$ = 3.94 ແລະ ຄ່າ SD=0.57 ເມື່ອທຽບກັບເກນທີ່ຕັ້ງໄວ້ແມ່ນຢູ່ໃນລະດັບເພິ່ງພໍໃຈຫຼາຍ ແລະ ເປັນໄປຕາມສົມມຸດຕິຖານທີ່ຕັ້ງໄວ້ ທັງນີ້ກໍເນື່ອງມາຈາກການຈັດກິດຈະກຳການຮຽນການສອນແບບ STAD ເປັນກິດຈະກຳການຮຽນຮູ້ທີ່ມີບັນຍາກາດທາງການຮຽນ, ມີຄວາມມ່ວນຊື່ນ, ທຸກຄົນໄດ້ປະຕິບັດກິດຈະກຳຢ່າງສະເໝີກັນ ແລະ ມີການແຂ່ງຂັນກັນ ເຮັດ

ໃຫ້ໃນເວລາຮຽນແມ່ນມີບັນຍາກາດດີ, ນັກຮຽນມີຄວາມກະຕືລືລົ້ນຕໍ່ການຮຽນຫຼາຍ, ນັກຮຽນໃຫ້ຄວາມສົນໃຈ ແລະ ຕັ້ງໃຈປະຕິບັດກິດຈະກຳຢ່າງມີຄວາມສຸກດ້ວຍຮູບແບບຂອງການເຮັດວຽກເປັນກຸ່ມ ຫຼື ເປັນທີມ ທີ່ຮຽນດ້ວຍການປຶກສາຫາລືກັນ, ນັກຮຽນທີ່ຮຽນເກັ່ງໄດ້ຊ່ວຍເຫຼືອນັກຮຽນທີ່ຮຽນອ່ອນເປັນ, ການຮຽນຮູ້ທີ່ໃຊ້ເກມການແຂ່ງຂັນເຂົ້າຊ່ວຍ, ເຮັດໃຫ້ຮັກຮຽນມີຄວາມຕື່ນເຕັ້ນ ແລະ ເອົາໃຈປະຕິບດກິດຈະກຳຜົນງານຂອງຕົນອອກມາດີປເພື່ອເຮັດໃຫ້ໃສ່ສິ່ງຜົນໃຫ້ນັກຮຽນມີຄວາມເພິ່ງພໍໃຈຫຼາຍຕໍ່ກັບການຈັດກິດຈະກຳການຮຽນການສອນແບບນີ້. ເຊິ່ງເຫັນວ່າ ຜົນໄດ້ຮັບໃນຄັ້ງນີ້ແມ່ນສອດຄ່ອງກັບແນວຄິດທິດສະດີທົ່ວໄປກ່ຽວກັບການຈູງໃຈຂອງມາສະໂລ (Maslow's general theory of human motivation) ທີ່ວ່າ: ຄວາມເພິ່ງພໍໃຈເປັນປັດໃຈສຳຄັນທີ່ຈະເຮັດໃຫ້ການຈັດການຮຽນ-ການສອນປະສົບຜົນສຳເລັດ (ພິມພິສຸດ ປອດໂປ່ງ, 2554, ໜ້າ. 65) ແລະ ສອດຄ່ອງກັບການຄົ້ນຄວ້າ ຂອງ (ບຸນຍືນ ວົງໄພໂລດ, 2015) ໄດ້ສຶກສາການຈັດການຮຽນການສອນ ເລື່ອງຄຳ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ໂດຍໃຊ້ວິທີສອນແບບ STAD ສຳລັບນັກສຶກສາ ປີທີ 1 ລະບົບ 12+4 ສາຍຄູພາສາລາວ-ວັນນະຄະດີ ທີ່ວິທະຍາໄລຄູຫຼວງພະບາງ ຜົນການຄົ້ນຄວ້າພົບວ່າ: ນັກສຶກສາມີຄວາມເພິ່ງພໍໃຈຕໍ່ການຮຽນການສອນ ໂດຍນຳໃຊ້ວິທີສອນແບບ STAD ໂດຍລວມຢູ່ໃນລະດັບເພິ່ງພໍໃຈຫຼາຍ ແລະ ສອດຄ່ອງກັບ ສິດທິສອນ ສຸກໄຊສະຫວັດ (2018) ໄດ້ສຶກສາ ການນຳໃຊ້ວິທີສອນແບບ STAD ເຂົ້າໃນການຈັດການຮຽນການສອນວິຊາພາສາລາວ ເລື່ອງການຂຽນຂອງນັກຮຽນ ຂັ້ນ ມ5 ໂຮງຮຽນມັດທະຍົມສຶກສາສົມບູນຍົມມະລາດ ແຂວງຄຳມ່ວນ. ຜົນການຄົ້ນຄວ້າພົບວ່າ: ນັກຮຽນມີຄວາມຄິດເຫັນຕໍ່ຜົນການຈັດກິດຈະກຳການຮຽນຮູ້ແບບກຸ່ມຮ່ວມມືເທັກນິກ STAD ເລື່ອງການຂຽນຂອງນັກຮຽນ ຂັ້ນ ມ5 ຢູ່ໃນລະດັບດີ.

## 6. ສະຫຼຸບຜົນ

ຜົນໄດ້ຮັບຈາກການຄົ້ນຄວ້າໃນຄັ້ງນີ້ສາມາດສະຫຼຸບຜົນໄດ້ດັ່ງນີ້:

1) ປະສິດທິພາບຂອງບົດສອນ ( $E_1 / E_2$) ຂອງການນຳໃຊ້ວິທີສອນແບບ STAD ເຂົ້າໃນການຈັດການຮຽນການສອນ ວິຊາ ພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າ ສຳລັບນັກຮຽນ ມັດທະຍົມ ປີທີ 2,ທີ່ໂຮງຮຽນມັດທະຍົມສາທິດ ພົບວ່າ: ປະສິດທິພາບຂອງບົດສອນ $E_1 / E_2$= 84.28 /90.83 ເຊິ່ງສູງກວ່າເກນ 80/80 ທີ່ຕັ້ງໄວ້. ສາມາດສະຫຼຸບໄດ້ວ່າ: ການນຳໃຊ້ວິທີສອນແບບ STAD ເຂົ້າໃນການຮຽນການສອນ ວິຊາພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າ ແມ່ນມີປະສິດທິພາບດີ.

2) ດັດສະນີປະສິດທິຜົນການຮຽນຮູ້ຂອງນັກຮຽນ (E.I) ໂດຍການນຳໃຊ້ວິທີສອນແບບ STAD ເຂົ້າໃນການຈັດການຮຽນການສອນ ວິຊາ ພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ສຳລັບນັກຮຽນ ຊັ້ນມັດທະຍົມປີທີ 2, ທີ່ໂຮງຮຽນມັດທະຍົມສາທິດ ມີຄ່າເທົ່າກັບ 0.841, ຄິດເປັນເປີເຊັນເທົ່າກັບ 84.1% ໝາຍຄວາມວ່າ: ຫຼັງຈາກທີ່ນັກຮຽນໄດ້ຮັບການສອນໂດຍວິທີສອນແບບ STAD ແລ້ວນັກຮຽນມີຄວາມກ້າວໜ້າທາງການຮຽນເພີ່ມຂຶ້ນ ຄິດເປັນເປີເຊັນເທົ່າກັບ 84.1 %. ຖືວ່າ ການຮຽນຮູ້ຂອງນັກຮຽນແມ່ນມີປະສິດທິຜົນຢູ່ໃນລະດັບດີຫຼາຍ.

3) ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ການຮຽນການສອນວິຊາພາສາລາວ ກ່ຽວກັບ ປະເພດ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວ ໂດຍໃຊ້ວິທີສອນແບບ STAD ສຳລັບນັກຮຽນ ຊັ້ນມັດທະຍົມ ປີທີ 2, ເມື່ອທຽບກັບເກນແລ້ວແມ່ນຢູ່ໃນລະດັບເພິ່ງພໍໃຈຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ $\overline{X}$=3.94 ແລະ ຄ່າ SD=0.57.

ຈາກຜົນໄດ້ຮັບທີ່ສະແດງຂ້າງເທິງນີ້ສາມາດສະຫຼຸບໄດ້ວ່າ: ຜົນຂອງການຄົ້ນຄວ້າທົດລອງໃນຄັ້ງນີ້ແມ່ນບັນລຸຕາມຈຸດປະສົງ ແລະ ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

## 7. ຂໍ້ຈຳກັດຂອງການຄົ້ນຄ້ວາ

- ກຸ່ມທົດລອງທີ່ໃຊ້ເຂົ້າໃນການສຶກສາຄົ້ນຄວ້າຂ້ອນຂ້າງໜ້ອຍ, ຜົນໄດ້ຮັບຈາກການສຶກສາຄົ້ນຄວ້າອາດຈະບໍ່ມີຄວາມຊັດເຈນເທົ່າທີ່ຄວນ.

## 8. ຂໍ້ສະເໜີແນະ

*ສະເໜີແນະໃນການນຳຜົນການຄົ້ນຄວ້າໄປໃຊ້:*

- ຄູທີ່ຈະນຳໃຊ້ວິທີສອນແບບ STAD ເຂົ້າໃນການຈັດກິດຈະກຳການຮຽນການສອນຄວນສຶກສາທິດສະດີການສອນແບບຮ່ວມມືເທັກນິກການແບ່ງກຸ່ມຜົນສຳເລັດ, ສຶກສາຫຼັກການ, ເປົ້າໝາຍ, ຂັ້ນຕອນການຈັດກິດຈະກຳແລະ ອົງປະກອບໃນການ

ຈັດກິດຈະກຳ ການຮຽນການສອນໃນເທັກນິກນີ້ໃຫ້ເຂົ້າໃຈຢ່າງ ເລິກເຊິ່ງຈຶ່ງຈະຊ່ວຍໃຫ້ຜູ້ຮຽນມີຜົນສຳເລັດທາງການຮຽນດີຂຶ້ນ.

- ຜູ້ສອນຄວນເອົາໃຈໃສ່ອະທິບາຍວິທີປະຕິບັດກິດຈະກຳຢ່າງລະອຽດ ພ້ອມທັງຊຸກຍູ້, ຕິດຕາມການປະຕິບັດກິດຈະກຳໃຫ້ເປັນປົກກະຕິ.

- ຜູ້ສອນເອົາໃຈໃສ່ສຶກສາຄົ້ນຄວ້າບົດສອນ ແລະ ຂັ້ນຕອນການປະຕິບັດກິດຈະກຳການສອນ ແບບ STADໃຫ້ລະອຽດ.

- ການປະຕິບັດກິດຈະກຳແຕ່ລະແຜນການສອນຄວນໃຫ້ຖືກຕ້ອງຕາມແຜນທີ່ວາງໄວ້ ເປັນຕົ້ນແມ່ນດ້ານເວລາ.

- ຄູຄວນເປັນກັນເອງ ສົ່ງເສີມໃຫ້ຜູ້ຮຽນໄດ້ສະແດງຄວາມຄິດເຫັນຫຼາຍຕື່ມ ເພາະວ່າ ຄວາມເພິງພໍໃຈຍັງຂ້ອນຂ້າງຕໍ່າ.

*ຂໍ້ສະເໜີແນະຕໍ່ການຄົ້ນຄວ້າໃນຄັ້ງຕໍ່ໄປ:*

1) ຄວນມີການສຶກສາຄົ້ນຄວ້າການຈັດກິດຈະກຳການຮຽນການສອນ ແບບ STAD ໄປໃຊ້ກັບການຮຽນຮູ້ໃນວິຊາອື່ນໆໃນແຕ່ລະຂັ້ນຮຽນ.

2) ຄວນນຳວິທີການຈັດກິດຈະກຳການຮຽນການສອນແບບ STAD ໄປສຶກສາຄົ້ນຄວ້າກັບທຸກພາກ, ທຸກທັກສະໃນວິຊາພາສາລາວ ເພື່ອສຶກສາຫາປະສິດທິພາບ ແລະ ປະສິດທິຜົນໃນການຮຽນຂອງນັກຮຽນ.

3) ຄວນມີການສຶກສາປຽບທຽບການຈັດກິດຈະກຳການຮຽນການສອນ ວິຊາ ພາສາລາວ ໂດຍໃຊ້ວິທີສອນແບບ STAD ກັບວິທີການສອນແບບອື່ນໆ.

## 9. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2015). ກົດໝາຍວ່າດ້ວຍການສຶກສາແຫ່ງຊາດສາທາລະນະລັດປະຊາທິປະໄຕປະຊາຊົນລາວ(ປັບປຸງ). ນະຄອນຫຼວງວຽງຈັນ: ໂຮງພິມຊາວໜຸ່ມ.

ກະຊວງສຶກສາທິການ ແລະ ກິລາ. (2015). *ວິໄສທັດຮອດປີ2030ຍຸດທະສາດຮອດປີ2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII (2016-2020).* ນະຄອນຫຼວງວຽງຈັນ: ບໍ່ລະບຸບ່ອນພິມ.

ຄຳພັນ ຄຳອ່ອນ ພ້ອມຄະນະ. (2011). *ຄູ່ມືບຳລຸງຍົກລະດັບຄູຊັ້ນຕົ້ນເປັນຊັ້ນກາງ ການສອນພາສາລາວ.* ນະຄອນຫຼວງວຽງຈັນ: ບໍ່ລະບຸບ່ອນພິມ.

ຈິລະນັນ ໄຕແສງ. (2551). *ຜົນການຈັດກິດຈະກຳການຮຽນ-ການສອນພາສາໄທດ້ານການອ່ານເຊີງວິເຄາະນັກຮຽນຊັ້ນມ.2 ດ້ວຍກຸ່ມຮ່ວມມື STAD. .* [ວິທະຍານິພົນ]. ມະຫາວິທະຍາໄລມະຫາສາລະຄາມ.

ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ. (2545). *19 ວິທີການຈັດການຮຽນຮູ້ ເພື່ອພັນທະນາຄວາມຮູ້ ແລະ ທັກສະ.* ກຸງເທບ: ຫ້າງຫຸ້ນສ່ວນຈຳກັດ.

ສຸວິມົນ ຕິລະພານັນ. (2550). *ສະຖິຕິ ແລະ ການວິໄຈເບື້ອງຕົ້ນທາງການສຶກສາ.* ມະຫາວິທະຍາໄລລາມຄຳແຫງ: ພາກວິຊາການປະເມີນ ແລະ ການວິໄຈ ຄະນະສຶກສາສາດ.

ສົມນຶກ ພັດທິຍະທະນີ. (2551). *ການວັດຜົນການສຶກສາ.* ກາລະສິນ: ປຣະສານການພິມ.

ບຸນຊົມ ສີສະອາດ. (2545). *ການວິໄຈເບື້ອງຕົ້ນ ພິມຄັ້ງທີ7.* ກຸງເທບ: ສຸວິຣິຍາສາດ.

ບຸນຊົມ ສີສະອາດ. (2546). *ການວິໄຈເບື້ອງຕົ້ນ.* ກຸງເທບ: ສຸວິຣິຍາສາສົນ.

ບຸນຊົມ ສີສະອາດ. (2546). *ການວິໄຈສຳລັບຄູ.* ກຸງເທບມະຫານະຄອນ: ສຸວິຣິຍາສານ.

ບຸນຊົມ ສີສະອາດ. (2554). *ການວິໄຈເບື້ອງຕົ້ນ.* ກຸງເທບ: ສຸວິຣິຍະສານ.

ບຸນຍືນ ວົງໄພໂລດ. (2015). *ການຈັດການຮຽນ-ການສອນເລື່ອງຄຳ ແລະ ໜ້າທີ່ຂອງຄຳເວົ້າໃນພາສາລາວໂດຍໃຊ້ວິທີສອນແບບ STAD ສຳລັບນັກສຶກສາປີທີ1 ລະບົບ 12+4 ທີ່ວິທະຍາໄລຄູຫຼວງພະບາງ.* [ວິທະຍານິພົນ].ວິທະຍາໄລຄູຫຼວງພະບາງ.